ສງງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

22-28 ກຸມພາ 2025
ປີທີ 14
ສະບັບທີ 1007
ລາຍສັບປະດາ


## ສຳເລັດກອງປະຊຸມສະໄໝວິສາມັນ ຄະນະບໍລິຫານງານສູນກາງພັກ ສະໄໝທີ XI



ອ່ານຕໍ່ໜ້າ 5

## ພົທ. ສຸວອນ ເລືອງບຸນມີ ເຄື່ອນໄຫວ ຊຸກຍູ້ ແລະ ເກັບກຳຂໍ້ມູນຢູ່ແຂວງໄຊຍະບູລີ

(ສພຊ)-ວັນທີ 19-22 ກຸມພາຜ່ານມາ, ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ແລະ ທ່ານ ເພັງ ນິລັນ ຄຳພັນເພັງ ປະທານສະພາປະຊາຊົນແຂວງ ພ້ອມດ້ວຍສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ໄດ້ເຄື່ອນໄຫວຊຸກຍູ້ ແລະ ເກັບກຳຂໍ້ມູນການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກ, ວຽກງານສາມສ້າງ,



ແລະ ວຽກງານພັດທະນາຊົນເຜົ່າ-ສາສະໜາ ຢູ່ 2 ຈຸດຂອງແຂວງໄຊຍະບູລີຄື: ບ້ານຫ້ວຍຄູນ ຈຸດສຸມປາກເປັດ ເມືອງຊຽງຮ່ອນ ແລະ ບ້ານຄຶກແອກ ເມືອງທົ່ງສາ; ໂດຍການຕ້ອນຮັບຂອງຄະນະນຳ

ອ່ານຕໍ່ໜ້າ 5

## ພົບປະພະນັກງານຫຼັກແຫຼ່ງ ແລະ ພໍ່ແມ່ປະຊາຊົນເມືອງປາກທາ




(ສພຊ)-ວັນທີ 19-21 ກຸມພາຜ່ານມາ, ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງປາກທາ ທ່ານ ບຸນພັດ ສີສົມບັດ ເລຂາທິການສະພາປະຊາຊົນແຂວງ ແລະ ທ່ານ ອ່ອງຄຳ ໄຊຍະລາດ ຮອງຫົວໜ້າພະແນກໂຍທາທິການແລະຂົນສົ່ງ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະ

ອ່ານຕໍ່ໜ້າ 8

## ສສຊ, ສສຂ ຫົວພັນ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8



(ສພຂ)-ວັນທີ 19-24 ກຸມພາຜ່ານມາ, ສະມາຊິກສະພາແຫ່ງຊາດ(ສສຊ)ປະຈຳເຂດເລືອກຕັ້ງທີ 8 ແຂວງ ຫົວພັນ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ນຳໂດຍທ່ານ ແກ້ວຈະເລີນ ເຊ່ຍຢົ້ງຢ່າງ ຮອງປະທານກຳມາທິການບັນດາເຜົ່າ ໄດ້ເຄື່ອນໄຫວໂຄສະນາເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຫົວພັນ ຊຸດທີ II ທີ່ບ້ານມ່ວງ ເມືອງສົບເບົາ, ບ້ານມອງນ້ຳເມືອງຊຽງຄໍ້, ບ້ານບັນເມືອງ

ອ່ານຕໍ່ໜ້າ 5

## ກົມໃຫຍ່ການເມືອງ ປກສ ຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ



ອ່ານຕໍ່ໜ້າ 9

## 3 ອົງການຈັດຕັ້ງມະຫາຊົນກະຊວງ ຍທຂ ຢ້ຽມຊົມຫ້ອງມູນເຊື້ອສະພາແຫ່ງຊາດ



ອ່ານຕໍ່ໜ້າ 9


ຮ່າງ ລັດຖະທຳມະນູນ... (ໜ້າ 6)


7 ຄຸນປະໂຫຍດ... (ໜ້າ 9)


ນູແວນເຊລັງ... (ໜ້າ 10)


ທວງຄາມ... (ໜ້າ 11)


ສະໝອງໄຫຼ (ໜ້າ 11)



ໃຜຄົ້ນເຮັດ ຈະຄຶກ... (ໜ້າ 12)

# ສສຊ ແລະ ສສນວ ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງປາກງື່ມ




(ສປນວ) - ວັນທີ 19 ກຸມພາຜ່ານມາ, ທ່ານ ປອ. ນາງ ວາລີ ເວດສະພົງ ສະມາຊິກສະພາແຫ່ງຊາດ(ສສຊ)ປະຈຳເຂດເລືອກຕັ້ງທີ 1, ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ພ້ອມດ້ວຍສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສນວ) ປະຈຳເຂດເລືອກຕັ້ງເມືອງປາກງື່ມ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II ຢູ່ເມືອງປາກງື່ມ ໂດຍການຕ້ອນຮັບຂອງທ່ານ ນາງ ອາມິດຕາ ສີປະມອນ ຮອງເລຂາພັກເມືອງ ຜູ້ຊີ້ນຳວຽກພະນັກງານ-ລັດຖະກອນ ພ້ອມດ້ວຍຄະນະປະຈຳ ແລະ ກຳມະການພັກເມືອງ, ພະນັກງານຫຼັກແຫຼ່ງ ແລະ ພະນັກງານ-ລັດຖະກອນ ຂອງບັນດາຫ້ອງການອ້ອມຂ້າງເມືອງ ເຂົ້າຮ່ວມ.

ທ່ານ ນາງ ອາມິດຕາ ສີປະມອນ ໄດ້ລາຍງານໃຫ້ຮູ້ສະພາບລວມຂອງເມືອງປາກງື່ມໂດຍຫຍໍ້ ກ່ຽວກັບຂໍ້ມູນ ດ້ານທີ່ຕັ້ງ, ດ້ານການເມືອງ-ແນວຄິດ, ຜົນສຳເລັດການຈັດຕັ້ງປະຕິບັດວຽກງານຜ່ານມາໃນແຕ່ລະຂົງເຂດ ໂດຍສະເພາະດ້ານເສດຖະກິດ, ວັດທະນະທຳ-ສັງຄົມ, ວຽກງານ ປກຊ-ປກສ ແລະ ບັນຫາຄົງຄ້າງຂອງອົງການປົກຄອງເມືອງເປັນຕົ້ນຍັງມີພະນັກງານ, ສະມາຊິກພັກ ແລະ ອົງການປົກຄອງບ້ານຈຳນວນໜຶ່ງຍັງຖືເບົາ, ມີການລະເມີດລະບຽບກົດໝາຍ; ການແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມ ຕິດພັນບັນຫາຢາເສບຕິດ, ຂີ້ລັກ, ງັດແງະ ຍັງມີຫຼາຍດ້ານບໍ່ທັນສາມາດແກ້ໄຂໄດ້ຢ່າງເດັດຂາດ; ການຄຸ້ມຄອງໂຄງການລົງທຶນຂອງລັດ ຍັງບໍ່ທັນໄດ້ດີ, ບາງໂຄງການຊັກຊ້າ, ຢຸດຊະງັກ; ການຈັດສັນຊາວຄ້າຂາຍຕາມແຄມທາງ ຍັງເຮັດບໍ່ທັນເດັດຂາດ, ການຊຸກຍູ້ສົ່ງເສີມການຜະລິດສິນຄ້າ ຍັງບໍ່ທັນເຂັ້ມແຂງ; ການຄຸ້ມຄອງຮ້ານກິນດື່ມບັນເທີງ, ຮ້ານອິນເຕີເນັດ ຍັງບໍ່ເຄື່ອນໄຫວຕາມລະບຽບ ແລະ ການຖິ້ມຂີ້ເຫຍື້ອຊະຊາຍ ຍັງແກ້ໄຂບໍ່ທັນໄດ້ດີ.

ຈາກນັ້ນ, ສະມາຊິກສະພາ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ກໍຄືບັນຫາສຳຄັນຕ່າງໆທີ່ໄດ້ພິຈາລະນາແລະຮັບຮອງເອົາໃນກອງປະຊຸມໂດຍສະເພາະຜົນການຈັດຕັ້ງປະຕິບັດວຽກງານຂອງລັດຖະບານ, ຂອງນະຄອນຫຼວງວຽງຈັນ ໃນທຸກຂົງເຂດວຽກງານໄລຍະຜ່ານມາແລະທິດທາງແຜນການໃນຕໍ່ໜ້າເພື່ອໃຫ້ຜູ້ມີສິດເລືອກຕັ້ງຢູ່ພາຍໃນເມືອງປາກງື່ມ ໄດ້ເຊື່ອມຊຶມ, ຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງຂວາງ; ພ້ອມນັ້ນ, ຍັງໄດ້ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງຜູ້ມີສິດເລືອກຕັ້ງ ຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍແລະບັນດາບັນຫາພົ້ນເດັ່ນຕ່າງໆທີ່ຈະເປັນຂໍ້ມູນໃຫ້ແກ່ ສສຊ ແລະ ສສນວ ໄດ້ນຳໄປຄົ້ນຄວ້າພິຈາລະນາ, ປະກອບຄຳຄິດຄຳເຫັນໃນການພິຈາລະນາບັນຫາສຳຄັນຕ່າງໆໃນກອງປະຊຸມສະໄໝສາມັນຂອງສອງສະພາ ທັງນຳສະເໜີຕໍ່ອົງການປົກຄອງ ແລະ ຊຸກຍູ້ພາກສ່ວນກ່ຽວຂ້ອງ ພິຈາລະນາແກ້ໄຂຕາມພາລະບົດບາດ.

# ຫາລືວຽກງານກວດສອບປະຈຳແຂວງຫຼວງນ້ຳທາ



(ສພຂ) - ຕອນເຊົ້າວັນທີ 26 ກຸມພານີ້ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ໄດ້ມີກອງປະຊຸມແລກປ່ຽນບົດຮຽນໃນການປຶກສາຫາລືວຽກງານກວດສອບປະຈຳແຂວງ ໂດຍການເປັນປະທານຂອງທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ມີບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການ ສພຂ ພ້ອມດ້ວຍທີມງານກວດສອບປະຈຳພາກເໜືອ ເຂົ້າຮ່ວມລວມ 14 ທ່ານ.

ທ່ານ ອິນຖາ ລືນາມມະຈັກ ປະທານອົງການກວດສອບປະຈຳພາກເໜືອ 2 ໄດ້ກ່າວຈຸດປະສົງແລະລາຍງານການເຄື່ອນໄຫວວຽກງານການເປີດບົ້ນກວດສອບປະຈຳແຂວງຫຼວງນ້ຳທາປີ 2024 ເປັນຕົ້ນບົດສະຫຼຸບຂາດຕົວການ ຈັດຕັ້ງປະຕິບັດວຽກງານຊັບສິນ ປະຈຳປີ 2024 ຕາມມະຕິກອງປະຊຸມສະໄໝສາມັນຂອງສະພາປະຊາຊົນແຂວງ; ກວດຄືນການຈັດຕັ້ງປະຕິບັດຄຳແນະນຳກວດສອບປີຜ່ານມາ; ກວດສອບການເກັບລາຍຮັບຊັບສິນ, ລາຍຮັບ-ລາຍຈ່າຍວິຊາການ, ລາຍຮັບ-ລາຍຈ່າຍງົບປະມານ, ການຄຸ້ມຄອງໜີ້ຕ້ອງຮັບ-ໜີ້ຕ້ອງສົ່ງ, ລາຍຮັບ-ຈ່າຍຄ່າປັບໃໝ, ການແບ່ງເງິນປັນຜົນຂອງວິສາຫະກິດ, ການຍົກເວັ້ນການຈັດເກັບລາຍຮັບ ແລະ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບ ປະມານແຫ່ງລັດ ປະຈຳປີ 2024 ຂອງສ່ວນສາອາກອນປະຈຳແຂວງ; ກວດຄືນການປະຕິບັດມະຕິກອງປະຊຸມສະໄໝສາມັນຂອງ ສພຂ; ກວດສອບລະບົບຄວບຄຸມພາຍໃນ, ການເກັບລາຍຮັບອາກອນ, ລາຍຮັບທີ່ບໍ່ແມ່ນພາສີອາກອນ, ລາຍຮັບຈາກຊັບສິນ, ລາຍຮັບ-ຈ່າຍງົບປະມານ, ການຄຸ້ມຄອງໜີ້ຕ້ອງຮັບ-ໜີ້ຕ້ອງສົ່ງ, ການໄລ່ລຽງອາກອນຂອງວິສາຫະກິດ, ການຍົກເວັ້ນອາກອນແລະລະບຽບການອື່ນໆທີ່ກ່ຽວຂ້ອງກັບບັນດາພະແນກການ ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກຳນົດໄວ້. ພ້ອມນັ້ນ, ຍັງໄດ້ຂໍຄຳເຫັນແນະນຳໃນການລົງການກວດສອບຈາກສະພາປະຊາຊົນແຂວງ,ບັນຫາໃດຈຸດໃດທີ່ຄວນລົງກວດສອບ,ຊອກໃຫ້ເຫັນຈຸດອ່ອນຂໍ້ຄົງຄ້າງ ແລະ ການສະໜອງຂໍ້ມູນຕ່າງໆ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານບັນລຸຕາມເປົ້າໝາຍ. ຈາກນັ້ນ, ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນຂອງ ສພຂ ຍັງໄດ້ລາຍງານບັນຫາທີ່ພົບເຫັນຕໍ່ວຽກງານກວດສອບຢູ່ພາຍໃນແຂວງ ເພື່ອໃຫ້ລົງກວດສອບຕົວຈິງຕື່ມອີກ.

ທ່ານ ຄຳຟອງ ອິນມານີ ໄດ້ມີຄຳເຫັນເປັນເອກະພາບຕໍ່ກັບການລົງເຄື່ອນໄຫວຕາມພາລະບົດບາດ, ຕາມກົດໝາຍໃນຄັ້ງນີ້ພ້ອມທັງແລກປ່ຽນສະເໜີຫຼາຍບັນຫາ; ການກວດສອບໃຫ້ສຳເລັດຕາມກຳນົດເວລາ, ຄາດໝາຍທີ່ວາງໄວ້ ແລະ ຮຽກຮ້ອງໃຫ້ສືບຕໍ່ກວດສອບຕາມຄຳແນະນຳ ທັງຊຸກຍູ້ອົງການທີ່ກ່ຽວຂ້ອງທີ່ກວດເຫັນແລ້ວ ໃຫ້ຮີບຮ້ອນເກັບງົບປະມານເຂົ້າລັດໂດຍໄວ ເພື່ອເຮັດໃຫ້ການກວດສອບບັນລຸເປົ້າໝາຍຕາມມະຕິ ສພຂ ຮັບຮອງເອົາ. ປະທານສະພາປະຊາຊົນແຂວງເນັ້ນໜັກວ່າ ຫຼັງຈາກກວດສອບຕົວຈິງແລ້ວ, ໃຫ້ປະສານສົມທົບກັບຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ຕື່ມອີກ.

**(ນາງ ວັນນີ ແຝງບົວວັນ)**

# ຄະນະເລຂາທິການ ສພຂ ຫຼວງນ້ຳທາ ປະຊຸມປະຈຳປີ 2024

(ສພຂ)-ວັນທີ 28 ກຸມພາຜ່ານມາ, ຄະນະເລຂາທິການສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຮອບດ້ານປະຈຳປີ 2024 ແລະ ທິດທາງແຜນການປີ 2025 ພາຍໃຕ້ການເປັນປະທານຂອງທ່ານ ມີໄຊ ມີວິໄລ ເລຂາທິການສະພາປະຊາຊົນແຂວງ ໂດຍການເຂົ້າຮ່ວມໂອ້ລົມຂອງທ່ານ ກົງເພັດ ແກ້ວບົວພາ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ຜູ້ຊີ້ນຳວຽກງານຄະນະເລ ຂາທິການ ເຊິ່ງມີບັນດາທ່ານປະທານ-ຮອງປະທານຄະນະກຳມະການ,ຫົວໜ້າ-ຮອງຫົວໜ້າຂະແໜງ, ຜູ້ຊ່ວຍວຽກຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງພາຍໃນ ສພຂ ເຂົ້າຮ່ວມ 33 ທ່ານ, ຍິງ 13 ທ່ານ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານປະຈຳປີ 2024 ແລະທິດທາງແຜນການປະຈຳປີ 2025 ເຊິ່ງຈະສືບຕໍ່ນຳເອົາແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມະຕິແລະນິຕິກຳຕ່າງໆຂອງລັດມາເຜີຍແຜ່ເຊື່ອມຊຶມໃຫ້ເລິກເຊິ່ງກວ່າເກົ່າ; ຮ່າງເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 9 ແລະ 10 ຂອງສະພາປະຊາຊົນແຂວງ; ຄົ້ນຄວ້າສ້າງຮ່າງແຜນການ, ເອກະສານທີ່ກ່ຽວຂ້ອງໃຫ້ແກ່ກອງປະຊຸມຄະນະປະຈຳ




ສພຂ ແລະ ກອງປະຊຸມຕ່າງໆ; ຊີ້ນຳ-ນຳພາວຽກງານທີ່ຕົນຮັບຜິດຊອບໃຫ້ສຳເລັດ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ສຸມໃສ່ປະກອບຄຳຄິດຄຳເຫັນຕໍ່ກັບຮ່າງບົດສະຫຼຸບດັ່ງກ່າວ ແລະ ວຽກງານປິ່ນອ້ອມ,ວຽກງານການພົວພັນປະສານງານກັບອົງການທີ່ກ່ຽວຂ້ອງຂອງແຂວງ ແລະ ເມືອງ ຢ່າງກົງໄປກົງມາ ເຮັດໃຫ້ຮ່າງບົດສະຫຼຸບມີເນື້ອໃນຖືກຕ້ອງ, ສອດຄ່ອງ ແລະ ສົມບູນຂຶ້ນກວ່າເກົ່າ ສາມາດນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າໃຫ້ສຳເລັດຕາມຄາດໝາຍ ແລະ ເຮັດໃຫ້ວຽກງານການປະສານງານຕ່າງໆດີຂຶ້ນເທື່ອລະກ້າວ, ສອດຄ່ອງກັບສະພາບຄວາມເປັນຈິງ ເພື່ອເຮັດໃຫ້ການເປັນເສນາທິການໃຫ້ແກ່ ສພຂ ໄດ້ຮັບຜົນສຳເລັດ, ມີຄຸນນະພາບຂຶ້ນກວ່າເກົ່າ.

ທ່ານ ກົງເພັດ ແກ້ວບົວພາ ໄດ້ມີຄຳເຫັນວ່າ: ຄະນະເລຂາທິການສະພາປະຊາຊົນແຂວງເປັນເສນາທິການໃຫ້ແກ່ສະພາປະຊາຊົນແຂວງ ເຊິ່ງເປັນວຽກງານທີ່ກວ້າງແລະຫຼາຍໜ້າວຽກ, ໃນໜຶ່ງປີຜ່ານມາ ມີຜົນງານ ແລະ ຜົນສຳເລັດຫຼາຍດ້ານ; ຈຶ່ງສືບຕໍ່ຈັດຕັ້ງປະຕິບັດວຽກງານທີ່ຮັບຜິດຊອບໃຫ້ສຳເລັດຫຼາຍກວ່າເກົ່າ, ແກ້ໄຂຂໍ້ຄົງຄ້າງບາງບັນຫາໃຫ້ດີກວ່າເກົ່າ. ທ່ານຍັງໄດ້ເນັ້ນໜັກໃຫ້ເພີ່ມທະວີການສຶກສາອົບຮົມວຽກງານການເມືອງ-ແນວຄິດພະນັກງານໃຫ້ເລິກເຊິ່ງ; ຄົ້ນຄວ້າຮ່ຳຮຽນເອົາຄວາມຮູ້ໃໝ່ໆ; ປັບປຸງວຽກງານເນື້ອໃນ, ບຸຄະລາກອນທີ່ເປັນເສນາທິການ ໃຫ້ສອດຄ່ອງກັບໜ້າທີ່ວຽກງານທີ່ຮັບຜິດຊອບ.

**(ນາງ ວັນນີ ແຝງບົວວັນ)**

# ສສຊ ປະຈຳເຂດເລືອກຕັ້ງທີ 8 ພົບປະຜູ້ມີສິດເລືອກຕັ້ງ ຢູ່ 3ເມືອງ

(ສພຂ) - ເພື່ອປະຕິບັດຕາມພາລະບົດບາດສິດ ແລະໜ້າທີ່ຂອງສະມາຊິກສະພາແຫ່ງຊາດ (ສສຊ)ປະຈຳເຂດເລືອກຕັ້ງ ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າໃນທົ່ວແຂວງ ທັງເປັນການລົງພົບປະຢ້ຽມຢາມຜູ້ມີສິດເລືອກຕັ້ງຢູ່ທ້ອງຖິ່ນຮາກຖານ ຕິດພັນກັບການນຳເອົາເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ເຜີຍແຜ່ໃຫ້ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນຜູ້ມີສິດເລືອກຕັ້ງ ໄດ້ຮັບຮູ້ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ໃນວັນທີ 24-26 ກຸມພານີ້, ທ່ານ ປອ. ສະຖາບັນດິດ ອິນສີຊຽງໃໝ່ ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ທັງເປັນ ສສຊ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະຢ້ຽມຢາມແລະເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຢູ່ເມືອງແອດ, ເມືອງຊຽງຄໍ້ ແລະ ບ້ານສົບຮາວ ເມືອງສົບເບົາ.



ພາຍຫຼັງໄດ້ຮັບຟັງການລາຍງານແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງແລະບ້ານໂດຍສັງເຂບ; ທ່ານ ປອ. ສະຖາບັນດິດ ອິນສີຊຽງໃໝ່ ໄດ້ນຳເອົາບາງບັນຫາສຳຄັນຕົ້ນຕໍທີ່ກອງປະຊຸມສະພາແຫ່ງຊາດໄດ້ພິຈາລະນາ ແລະ ຮັບຮອງເອົາ ເປັນຕົ້ນແມ່ນບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025, ກົດໝາຍ ແລະ ມະຕິກອງປະຊຸມ ເພື່ອເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ໄດ້ຮັບຮູ້ ແລະ ເຂົ້າໃຈແຈ້ງຕໍ່ບັນດາເນື້ອໃນ ແລະ ຜົນສຳເລັດດັ່ງກ່າວ. ນອກນັ້ນ, ຍັງໄດ້ເປີດໂອກາດໃຫ້ຜູ້ທີ່ເຂົ້າຮ່ວມສະເໜີຂໍ້ຂັດຂ້ອງໝອງໃຈ ແລະບັນຫາຕ່າງໆທີ່ຕິດພັນກັບການດຳລົງຊີວິດ ທີ່ຍັງພົບຄວາມຫຍຸ້ງຍາກເພື່ອເປັນຂໍ້ມູນນຳໄປຄົ້ນຄວ້າ ແລະ ປະສານສົມທົບພາກສ່ວນທີ່ກ່ຽວຂ້ອງເພື່ອຊອກຫາທາງອອກ ແລະ ວິທີທາງແກ້ໄຂ ເປັນຕົ້ນແມ່ນບັນຫາເສັ້ນທາງ, ຜົນກະທົບຈາກການລົງທຶນຂອງລັດ, ລາຄານ້ຳມັນ, ຄ່າຄອງຊີບນັບມື້ສູງຂຶ້ນ ແລະການປະຕິບັດນະໂຍບາຍຕໍ່ບຸກຄົນທີ່ມີຄຸນງາມຄວາມດີຕໍ່ປະເທດຊາດໃນປາງສົງຄາມ; ຈາກນັ້ນ, ກໍໄດ້ອະທິບາຍຊີ້ແຈງບາງຄຳສະເໜີ ແລະ ຈະນຳເອົາບາງຄຳສະເໜີ ໄປປະສານສົມທົບກັບພາກສ່ວນກ່ຽວຂ້ອງພ້ອມກັນແກ້ໄຂ.

ທ່ານ ຮອງລັດຖະມົນຕີກະຊວງແຜນການແລະການລົງທຶນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາຜົນງານທີ່ເມືອງ ແລະ ບ້ານ ຍາດມາໄດ້ໃນໄລຍະຜ່ານມາ ເຊິ່ງມີຫຼາຍດ້ານພົ້ນເດັ່ນ; ຮຽກຮ້ອງໃຫ້ພະນັກງານເອົາໃຈໃສ່ຮັກສາມູນ ເຊື້ອຄວາມສາມັກຄີທີ່ເປັນປຶກແຜ່ນ ແລະ ພ້ອມກັນເອົາໃຈໃສ່ປະຕິບັດໜ້າທີ່ຮັບໃຊ້ປະຊາຊົນ, ເຮັດລ້ອນໜ້າທີ່ທີ່ພັກ-ລັດ ແລະປະຊາຊົນມອບໝາຍ ໃຫ້ມີຜົນສຳເລັດ; ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ພໍ່ແມ່ປະຊາຊົນທີ່ຍັງຮັກສາມູນເຊື້ອດຸໝັ່ນຂະຫຍັນພຽນ, ຊ່ວຍເຫຼືອເບິ່ງແຍງເຊິ່ງກັນແລະກັນ, ພ້ອມກັນຕໍ່ຕ້ານປາກົດການຫຍໍ້ທໍ້ຕ່າງໆທີ່ຈະເກີດຂຶ້ນ ແລະ ເອົາໃຈໃສ່ແຂ່ງຂັນກັນສ້າງເສດຖະກິດຄອບຄົວຂອງຕົນເອງໃຫ້ມີຄວາມເຂັ້ມແຂງ ເພື່ອເຮັດໃຫ້ຊີວິດການເປັນຢູ່ນັບມື້ນັບດີຂຶ້ນເປັນກ້າວໆ.

ໃນການເຄື່ອນໄຫວຄັ້ງນີ້, ຍັງໄດ້ນຳເອົາເຄື່ອງສຽງຈຳນວນໜຶ່ງ ມອບໃຫ້ເມືອງແອດ, ເມືອງຊຽງຄໍ້ ແລະ ບານສົບຮາວ ເພື່ອນຳໃຊ້ເຂົ້າໃນວຽກງານລວມຂອງເມືອງ ແລະ ບ້ານ ລວມມູນຄ່າ 12 ລ້ານກີບ.

**(ເອັນ ແກ້ວບຸນມີ)**

# ສສຊ ເຂດ 10 ແລະ ສສຂ ເຄື່ອນໄຫວວຽກງານຢູ່ເມືອງຫຼຸລະຄົມ




(ສພຂ) - ວັນທີ 25 ກຸມພານີ້ ທີ່ຫ້ອງການສຶກສາທິການ ແລະກິລາເມືອງຫຼຸລະຄົມແຂວງວຽງຈັນ, ທ່ານ ລຳໄມ ກູດລາວົງ ຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 10 ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກເມືອງຫຼຸລະຄົມ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງວຽງຈັນ ຊຸດທີ II ໂດຍການຕ້ອນຮັບຂອງທ່ານ ນາງ ວົງເດືອນ ວັດຕະໂສ ເຈົ້າເມືອງໆ ຫຼຸລະຄົມ ພ້ອມດ້ວຍອົງການ, ກົມກອງ ແລະ ພະນັກງານ-ລັດຖະກອນພາຍໃນເມືອງ ເຂົ້າຮ່ວມຮັບຟັງ.

ທ່ານ ນາງ ວົງເດືອນ ວັດຕະໂສ ໄດ້ລາຍງານການຈັດຕັ້ງປະຕິບັດວຽກງານຮອບດ້ານຂອງເມືອງໃນໄລຍະຜ່ານມາ ໂດຍສະເພາະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນປີ 2024 ແລະ ທິດທາງແຜນການຈຸດສຸມໄລຍະ 6 ເດືອນຕົ້ນປີ 2025, ວຽກງານປະສານສົມທົບກັບສະພາປະຊາຊົນແຂວງ, ສະພາບທາງສຽງ ແລະ ຄວາມມຸ່ງມາດປາຖະໜາຂອງປະຊາຊົນບັນດາເຜົ່າ ພ້ອມທັງລາຍງານການເຄື່ອນໄຫວຂອງອະນຸກຳມະການຮັບຜິດຊອບກະກຽມກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກເມືອງ ຄັ້ງທີ VIII ໂດຍລວມແລ້ວວຽກງານແຕ່ລະດ້ານຂອງເມືອງ ແມ່ນດຳເນີນໄປຢ່າງຖືກທິດ ແລະ ມີຜົນສຳເລັດໃນລະດັບສູງ; ພ້ອມນີ້, ຍັງໄດ້ສະເໜີບາງບັນຫາຕໍ່ ສສຊ ແລະ ສສຂ ເພື່ອນຳໄປຄົ້ນຄວ້າ ແລະ ນຳສະເໜີພາກສ່ວນກ່ຽວຂ້ອງຂັ້ນເທິງພິຈາລະນາແກ້ໄຂໂດຍໄວ ເປັນຕົ້ນສະພາບເສັ້ນທາງເລກ 10 ແລະເສັ້ນທາງເວັ້ນລົດໜັກອອກຈາກຕົວເມືອງ ເປ່ເພຫຼາຍຈຸດ, ເລັ່ງທວງທຶນສ້ອມ ແປງເສັ້ນທາງທີ່ສະເໜີໄປແລ້ວ ແລະ ບັນຫາອື່ນໆທີ່ສັງຄົມ, ປະຊາຊົນ ເປັນຫ່ວງເປັນໄຍ ແລະ ຄອງຄອຍ. ຈາກນັ້ນ, ສສຊ ແລະ ສສຂ ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8.

# ເຜີຍແຜ່ນິຕິກຳຂົງເຂດວຽກງານສຶກສາທິການ ແລະ ກິລາ ຢູ່ 6 ເມືອງ ແຂວງສະຫວັນນະເຂດ



(ສພຂ) - ວັນທີ 24-27 ກຸມພາຜ່ານມາ, ທ່ານ ນາງ ພູທອນ ແກ້ວພູວົງ ຮອງປະທານສະພາປະຊາຊົນແຂວງສະຫວັນນະເຂດ ແລະ ທ່ານ ຄຳດີ ສຸວັນນະສານ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າພ້ອມດ້ວຍຄະນະໄດ້ເຄື່ອນໄຫວໂຄສະນາເຜີຍແຜ່ນິຕິກຳໃຕ້ກົດໝາຍໃນຂົງເຂດວຽກງານສຶກສາທິການ ແລະ ກິລາ ຢູ່ 6 ເມືອງ ຄື: ເມືອງພີນ, ພະລານໄຊ, ສອງຄອນ, ໄຊພູທອງ, ອຸທຸມພອນ ແລະ ອາດສະພັງທອງ; ມີບັນດາທ່ານຮອງເຈົ້າເມືອງ ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ຄະນະນຳພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ຄະນະຮັບຜິດຊອບວຽກງານການສຶກສາ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ, ອຳນາດການປົກຄອງບ້ານ, ຄູ-ອາຈານ ຕະຫຼອດຮອດພໍ່ແມ່ປະຊາຊົນ ແລະ ນັກຮຽນ-ນັກສຶກສາ ໃນແຕ່ລະຈຸດຂອງທັງ 6 ເມືອງ ເຂົ້າຮ່ວມຮັບຟັງທັງໝົດ 422 ຄົນ, ຍິງ 193 ຄົນ.

ການເຄື່ອນໄຫວໂຄສະນາເຜີຍແຜ່ຄັ້ງນີ້ ຄະນະໄດ້ຮັບຟັງການລາຍງານໂດຍສັງເຂບຕໍ່ກັບວຽກງານສຶກສາທິການແລະກິລາ ຂອງແຕ່ລະຈຸດໃນໄລຍະຜ່ານມາ. ຈາກນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ຮັບຟັງການເຜີຍແຜ່ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໄລຍະຜ່ານມາ ສະບັບເລກທີ 136/ສພຊ, ລົງວັນທີ 11 ທັນວາ 2024; ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໄລຍະຜ່ານມາ ສະບັບເລກທີ 24/ສພຂ.ສຂ, ລົງວັນທີ 25 ທັນວາ 2024 ແລະ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການມີສ່ວນຮ່ວມຂອງສັງຄົມຕໍ່ການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ທົ່ວແຂວງສະຫວັນນະເຂດ ສະບັບເລກທີ 535/ຈຂ, ລົງວັນທີ 01 ມີນາ 2024. ພາຍຫຼັງສິ້ນສຸດການສະເໜີ ແລະ ເຜີຍແຜ່ແລ້ວ ຍັງເປີດໂອກາດໃຫ້ຜູ້ເຂົ້າຮ່ວມ ໄດ້ແລກປ່ຽນຄຳຄິດ-ຄຳເຫັນຢ່າງກົງໄປກົງມາ ໂດຍສ່ວນໃຫຍ່ແມ່ນບັນຫາການເຂົ້າຮຽນຂອງນັກຮຽນໃນຊັ້ນຮຽນຕ່າງໆ ນັບມື້ຫຼຸດລົງ ແລະອັດຕາການປະລະການຮຽນແຕ່ລະຊັ້ນ ນັບມື້ເພີ່ມຂຶ້ນ ເຊິ່ງບັນຫາທີ່ຕິດພັນກັບບັນດານິຕິກຳທີ່ໄດ້ເຜີຍແຜ່ຄັ້ງນີ້ ເຮັດໃຫ້ຜູ້ເຂົ້າຮ່ວມຮັບຟັງມີຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ກັບນິຕິກຳຕ່າງໆໃນຂົງເຂດສຶກສາທິການ ແລະ ກິລາຫຼາຍຂຶ້ນ ພ້ອມທັງເປັນການຊຸກຍູ້ສົ່ງເສີມການເຂົ້າໂຮງຮຽນຂອງນັກຮຽນ ແລະຫຼຸດຜ່ອນອັດຕາການປະລະການຮຽນຂອງນັກຮຽນຊັ້ນຕ່າງໆ.

ທ່ານ ນາງ ພູທອນ ແກ້ວພູວົງ ໄດ້ຮຽກຮ້ອງໃຫ້ແຕ່ລະພາກສ່ວນ ຈົ່ງພ້ອມກັນສືບຕໍ່ຈັດຕັ້ງຜັນຂະຫຍາຍເນື້ອໃນທີ່ໄດ້ເຜີຍແຜ່ຄັ້ງນີ້ ໃຫ້ກວ້າງຂວາງ, ເລິກເຊິ່ງຂຶ້ນ ດ້ວຍການສືບຕໍ່ລົງໂຄສະນາເຜີຍແຜ່ບັນດາເນື້ອໃນຈິດໃຈຂອງນິຕິກຳໃຕ້ກົດໝາຍໃນຂົງເຂດວຽກງານສຶກສາທິການ ແລະ ກິລາ ໃຫ້ເຂົ້າສູ່ລົງເລິກໃນການຈັດຕັ້ງປະຕິບັດວຽກງານຕົວຈິງ, ຖືກຕ້ອງສອດຄ່ອງຕາມຂອບເຂດສິດ, ພາລະບົດບາດ ແລະ ໜ້າທີ່ວຽກງານຂອງຕົນ ໃຫ້ປະສົບຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

ໃນໂອກາດທີ່ລົງມາໂຄສະນາເຜີຍແຜ່ຄັ້ງນີ້ ທາງຄະນະຍັງໄດ້ມອບອຸປະກອນການຮຽນ, ອຸປະກອນກິລາ, ນ້ຳຫວານ ແລະ ເຂົ້າໜົມຈຳນວນໜຶ່ງ ມອບໃຫ້ແຕ່ລະຈຸດ ລວມມູນຄ່າ 3 ລ້ານກີບ; ນອກຈາກນີ້, ຍັງໄດ້ໄປຢ້ຽມຢາມ ແລະ ໃຫ້ກຳລັງໃຈອຳນາດການປົກຄອງ ກໍຄືພໍ່ແມ່ປະຊາຊົນບ້ານດົງກີໂລ ເມືອງອາດສະພັງທອງ ທີ່ກຳລັງອອກແຮງງານສາມັກຄີກໍ່ສ້າງເສັ້ນທາງເບຕົງ ຄວາມຍາວ 370 ແມັດ, ກວ້າງ 4 ແມັດ ໂດຍການລະດົມທຶນຂອງພໍ່ແມ່ປະຊາຊົນພາຍໃນບ້ານ ເຊິ່ງທາງຄະນະກໍໄດ້ປະກອບສ່ວນເງິນຈຳນວນໜຶ່ງໃຫ້ແກ່ບ້ານດັ່ງກ່າວອີກດ້ວຍ.

**(ນາງ ຄອນສະຫວັນ ເມກສະຫວັນ)**

# ອັດຕະປື ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນເທື່ອທີ 8




(ສພຂ) - ເພື່ອໂຄສະນາເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ອັດຕະປື ຊຸດທີ II ໃຫ້ອົງການຈັດຕັ້ງພັກ-ລັດ, ພະນັກງານ-ລັດຖະກອນ, ໄດ້ເຊື່ອມຊຶມຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງກວ້າງຂວາງ ແລະ ສົນທະນາແລກປ່ຽນ ແນ ໃສ່ຮ່ວມກັນປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນແຂວງ, ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ມີຜົນສຳເລັດດີຂຶ້ນເປັນກ້າວໆ. ຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ 17 ແລະ ສະພາປະຊາຊົນແຂວງອັດຕະປື ໄດ້ຈັດກອງປະຊຸມເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງອັດຕະປື ຊຸດທີ II ໃນວັນຈັນທີ 24 ກຸມພາ ຜ່ານມາ ທີ່ຫໍປະຊຸມໃຫຍ່ຂອງແຂວງ ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານ ຄສຊ ປະຈຳເຂດເລືອກຕັ້ງທີ 17 ທັງເປັນປະທານ ສພຂ ອັດຕະປື ເຊິ່ງມີບັນດາຄະນະປະຈຳ ແລະ ກຳມະການພັກແຂວງ, ພະແນກການ ແລະ ອົງການທຽບເທົ່າພະແນກການ, ອະດີດການນຳພັກ-ລັດຂອງແຂວງ ແລະ ພະນັກງານ-ລັດຖະກອນອ້ອມຂ້າງແຂວງເຂົ້າຮ່ວມຮັບຟັງ; ໃນວັນທີ 25 ກຸມພາ ໄດ້ສືບຕໍ່ເຜີຍແຜ່ຢູ່ກອງບັນຊາການທະຫານແຂວງ ແລະ ກອງບັນຊາການ ປກສ ແຂວງ ເຊິ່ງມີບັນດາຄະນະພັກ-ຄະນະບັນຊາ ພ້ອມດ້ວຍນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ເຂົ້າຮ່ວມຮັບຟັງ.

ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ຍົກໃຫ້ເຫັນເຖິງຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ທີ່ໄດ້ດຳເນີນແຕ່ວັນທີ 18 ພະຈິກ ຫາ 12 ທັນວາ 2024 ເປັນເວລາ 18 ວັນ ເຊິ່ງໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ທັງໝົດ 15 ເນື້ອໃນ ແລະ ຮັບຮອງເປັນມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 23 ສະບັບ; ຜົນສຳເລັດກອງປະຊຸມ ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ເຂົ້າສູ່ຊີວິດຕົວຈິງ, ໝາກຜົນແຫ່ງສະຕິປັນຍາ, ການຍົກສູງຄວາມຮັບຜິດຊອບການເມືອງຂອງບັນດາສະມາຊິກສະພາແຫ່ງຊາດ (ສສຊ), ການນຳພາຂອງກົມການເມືອງສູນກາງພັກ, ຄວາມເອົາໃຈໃສ່ໃນການຕິດຕາມຊຸກຍູ້ຂອງສະພາແຫ່ງຊາດ, ການຕັດສິນໃຈສູງຂອງລັດຖະບານ ແລະ ອົງການທີ່ກ່ຽວຂ້ອງຕໍ່ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃຫ້ຜ່ອນຄາຍລົງເທື່ອລະກ້າວ ແລະ ນຳເອົາປະເທດຊາດກ້າວຂຶ້ນຢ່າງໜັກແໜ້ນ. ໄລຍະດຳເນີນກອງປະຊຸມ ໄດ້ຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ 156 ທັງໝົດ 396 ສາຍ ສັງລວມໄດ້ 376 ເລື່ອງ; ບັນຫາພົ້ນເດັ່ນແມ່ນລາຄາສິນຄ້າແພງ, ການສ້ອມແປງຖະໜົນຫົນທາງ, ການຊົດເຊີຍຜົນກະທົບ, ການຂຸດຄົ້ນບໍ່ແຮ່, ການປະລະການຮຽນ ແລະ ໂກຕາຄູ, ການບໍລິການສຸຂະພາບຢູ່ໂຮງໝໍ, ການຄຸ້ມຄອງຮ້ານບັນເທີງ ແລະ ຮ້ານເກມ, ການພັດມະນາສີມືແຮງງານ, ການປະຕິບັດໜ້າທີ່ຂອງພະນັກງານຂົງເຂດຍຸຕິ ທຳ ແລະ ການປະຕິບັດນະໂຍບາຍຕ່າງໆ.

ສສຊ ປະຈຳເຂດເລືອກຕັ້ງ ຍັງໄດ້ຜັດປ່ຽນກັນເຜີຍແຜ່ມະຕິທີ່ໄດ້ຮັບຮອງໃນກອງປະຊຸມຂອງສະພາແຫ່ງຊາດ ເປັນຕົ້ນ: ການດັດແກ້ງົບປະມານແຫ່ງລັດປີ 2024; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ 2024 ແລະ ແຜນການປະຈຳປີ 2025; ແຜນການລົງທຶນຂອງລັດປະຈຳປີ 2025; ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2024 ແລະ ແຜນການປະຈຳປີ 2025; ແຜນຈັດສັນງົບປະມານແຫ່ງລັດ ໃຫ້ກະຊວງ, ອົງການຂັ້ນສູນກາງ ແລະ ບັນດາແຂວງ ປະຈຳປີ 2025; ການຈັດຕັ້ງປະຕິບັດວຽກງານສາມສ້າງ ຕາມມະຕິສະພາແຫ່ງຊາດ ສະບັບເລກທີ 02/ສພຊ, ລົງວັນທີ 28 ມັງກອນ 2016; ການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ, ການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ; ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດວັດທະນະທຳ-ສັງຄົມ 4 ສະບັບ; ວິໄສທັດຮອດປີ 2040, ແຜນຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຮອດປີ 2030; ບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025, ບົດລາຍງານຜົນການກວດກາຕາມຜົນການກວດສອບປີ 2022; ບົດລາຍງານຂອງອົງການກວດສອບແຫ່ງລັດກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025, ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈຳປີ 2023; ການແຕ່ງຕັ້ງສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025 ຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ; ການສ້າງ ແລະ ປັບປຸງກົດໝາຍ 10 ສະບັບ ໃນນີ້, ສ້າງໃໝ່ 2 ສະບັບຄື: 1) ກົດໝາຍວ່າດ້ວຍການພັດທະນາສີມືແຮງງານ, 2) ກົດໝາຍວ່າດ້ວຍທີ່ຢູ່ອາໄສ ແລະ ປັບປຸງ 8 ສະບັບຄື: 1) ກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປລາວ, 2) ກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ, 3) ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, 4) ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, 5) ກົດໝາຍວ່າດ້ວຍການສຶກສາ, 6) ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ, 7) ກົດໝາຍວ່າ

ອ່ານຕໍ່ໜ້າ 11

# ສພຂ ຮ່ວມກັບກອງທຶນພັດທະນາແຂວງ ເຄື່ອນໄຫວວຽກງານຢູ່ເມືອງລ້ອງຊານ



(ສພຂ)-ວັນທີ 22-23 ກຸມພານີ້, ທ່ານ ຄຳພູທອນ ວົງພະຈັນ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ (ສພຂ) ໄຊສົມບູນຮ່ວມກັບທ່ານ ສີສຸພັນ ໂພໄຊສີ ຫົວໜ້າກອງທຶນພັດທະນາແຂວງ ພ້ອມດ້ວຍພະນັກງານຂອງ ສພຂ ແລະ ກອງທຶນພັດທະນາແຂວງ ໄດ້ເຄື່ອນໄຫວວຽກງານຢູ່ເມືອງລ້ອງຊານ (ເຂດ 516); ໂດຍການຕ້ອນຮັບຂອງທ່ານ ສົມພັນ ສີສົມບູ໊ງ ຄະນະປະຈຳພັກເມືອງ, ຮອງເຈົ້າເມືອງ ທັງເປັນສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງລ້ອງຊານ ໄດ້ນຳທາງເຄື່ອນໄຫວ.

ການເຄື່ອນໄຫວຄັ້ງນີ້ ໄດ້ນຳເອົາແນວຄິດຈິດໃຈທີ່ມີຄວາມໝາຍອັນສຳຄັນຫຼາຍຕໍ່ພໍ່ແມ່ປະຊາຊົນ ເຊິ່ງໃນນາມ ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ຈຶ່ງນຳໃຊ້ບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ຖືກ ເຊີນຈາກກອງທຶນພັດທະນາແຂວງ ໃຫ້ລົງເຜີຍແຜ່, ໂຄສະນາ, ຜັນຂະຫຍາຍ ແລະ ແຈ້ງຂ່າວ ຮ່ວມກັບກອງທຶນດັ່ງກ່າວ ໃຫ້ແກ່ພໍ່ແມ່ປະຊາຊົນທີ່ຢູ່ໃນແຂວງໄຊສົມບູນຮັບຮູ້ກັນຢ່າງທົ່ວເຖິງ.

ທ່ານ ສີສຸພັນ ໂພໄຊສີ ໄດ້ແຈ້ງໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າ ຮັບຮູ້ ແລະ ເຂົ້າໃຈກ່ຽວກັບສິນເຊື່ອຄື: ວົງເງິນຕ່ຳສຸດ 100 ລ້ານກີບ ແລະ ສູງສຸດບໍ່ເກີນ 10 ຕື້ກີບຕໍ່ 1 ລາຍການ ແລະ ໄລຍະເວລາຂອງສັນຍາກູ້ຢືມ ບໍ່ເກີນ 5 ປີ; ອັດຕາດອກເບ້ຍເງິນກູ້ບໍ່ເກີນ 6% ຕໍ່ປີ; ເປົ້າໝາຍການກູ້ຢືມເງິນ: ຂະແໜງກະສິກຳ ແລະ ປ່າໄມ້, ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ, ຂະແໜງບໍລິການ-ທ່ອງທ່ຽວ ແລະ ຂະແໜງການຄ້າ; ເງື່ອນໄຂຂອງຜູ້ກູ້ຢືມ: ກຸ່ມການຜະລິດ/ສະຫະກອນການຜະລິດທີ່ຕິດພັນກັບຂະແໜງກະສິກຳ, ການຄ້າ, ການບໍລິການ, ອຸດສາຫະກຳ ແລະ ຫັດຖະກຳ ທີ່ຖືກຕ້ອງຕາມລະບຽບ; ເປັນຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນທຸລະກິດຖືກຕ້ອງ ຕາມກົດໝາຍ; ມີໃບອະນຸຍາດດຳເນີນທຸລະກິດທີ່ສອດຄ່ອງຕາມຂະແໜງການເປົ້າໝາຍ, ກໍລະນີນຳໃຊ້ໃບອະນຸຍາດດຳເນີນທຸລະກິດດຽວກັນເພື່ອຂໍແຫຼ່ງທຶນຈາກທະນາຄານໃດໜຶ່ງແລ້ວ ຈະບໍ່ມີສິດຂໍແຫຼ່ງທຶນຈາກກອງທຶນພັດທະນາ ແຂວງອີກ; ເປັນຫົວໜ່ວຍທຸລະກິດທີ່ມີເງິນລົງທຶນຕົນເອງຫຼາຍກວ່າ 30% ຂອງເງິນລົງທຶນທັງໝົດ, ມີພື້ນຖານຄວາມ ພ້ອມໃນການຜະລິດ ແລະ ການບໍລິການ; ເປັນຫົວໜ່ວຍທຸລະກິດທີ່ຖືບັນຊີ ແລະ ປະຕິບັດພັນທະອາກອນຕາມກົດໝາຍທີ່ກ່ຽວຂ້ອງຢ່າງຄົບຖ້ວນ ແລະ ເປັນປົກກະຕິ; ເປັນຫົວໜ່ວຍທຸລະກິດທີ່ບໍ່ທັນໄດ້ຮັບນະໂຍບາຍດັ່ງກ່າວຈາກ ທະນາຄານທຸລະກິດອື່ນມາກ່ອນ; ມີຫຼັກຊັບຄ້ຳປະກັນເປັນໃບຕາດິນຖາວອນ ຫຼື ປຶ້ມເງິນຝາກມີກຳນົດຢູ່ທະນາຄານທຸລະກິດ; ມີຄວາມຮູ້ ແລະ ຄວາມຊຳນານກ່ຽວກັບທຸລະກິດທີ່ກຳລັງສະເໜີຂໍກູ້ຢືມເງິນ.

ຫົວໜ້າກອງທຶນພັດທະນາແຂວງ ຍັງໃຫ້ຮູ້ຕື່ມອີກວ່າ: ເອກະສານປະກອບໃນການສະເໜີກູ້ຢືມມີ: ເອກະສານ ທີ່ຕິດພັນກັບການສ້າງຕັ້ງກຸ່ມການຜະລິດ-ສະຫະກອນການຜະລິດໃນຂະແໜງການ ຈາກພາກສ່ວນກ່ຽວຂ້ອງ (ຖ້າກໍລະນີເປັນກຸ່ມການຜະລິດ); ໃບສະເໜີຂໍສິນເຊື່ອ (ຖ້າກໍລະນີເປັນກຸ່ມການຜະລິດ); ໃບສະເໜີຂໍສິນເຊື່ອ (ຕາມແບບຟອມ ຂອງກອງທຶນພັດທະນາແຂວງໄຊສົມບູນ); ເອກະສານນິຕິກຳຂອງທຸລະກິດ: ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ໃບມອບພັນທະອາກອນ; ເອກະສານນິຕິກຳສ່ວນບຸກຄົນຂອງຜູ້ກູ້ຢືມ ແລະ ຜູ້ກູ້ຢືມຮ່ວມ (ບັດປະຈຳຕົວ/ປຶ້ມສຳມະໂນຄົວ); ເອກະສານລາຍງານການເງິນຂອງທຸລະກິດ (ໃບສະຫຼຸບຊັບສົມບັດ, ໃບລາຍງານຜົນໄດ້ຮັບ); ແຜນລາຍລະອຽດການນຳໃຊ້ເງິນກູ້ຂອງຫົວໜ່ວຍທຸລະກິດ; ເອກະສານກ່ຽວກັບທຸລະກິດ/ໂຄງການ (ເອກະສານຢັ້ງຢືນຄວາມຄືບໜ້າໂຄງການ, ການປະກອບທຶນຂອງຜູ້ກູ້ຢືມ, ແຜນທຸລະກິດ, ສັນຍາທຸລະກິດ/ໂຄງການ) ແລະ ເອກະສານກ່ຽວກັບຫຼັກຊັບຄ້ຳປະກັນ.

ການເຜີຍແຜ່ຄັ້ງນີ້, ພໍ່ແມ່ປະຊາຊົນບັນດາເຜົ່າທີ່ອາໄສຢູ່ໃນເມືອງລ້ອງຊານ (ເຂດ 516) ຫຼາຍຄອບຄົວທີ່ມີເງື່ອນໄຂ ໃຫ້ຄວາມສົນໃຈຫຼາຍ ສະແດງອອກໄດ້ຜັດປ່ຽນກັນແລກປ່ຽນຮຽນຮູ້ ແລະ ສະເໜີຖາມເພີ່ມຕື່ມຕໍ່ກັບການກູ້ຢືມ ເພື່ອຄວາມສະດວກໃນການກູ້ຢືມ ແລະ ກຽມດຳເນີນທຸລະກິດໃນຕໍ່ໜ້າ; ນອກນັ້ນ, ທາງທີມງານຍັງໄດ້ຕິດຕາມ, ກວດກາເບິ່ງການດຳເນີນທຸລະກິດຕົວຈິງຂອງລູກຄ້າທີ່ກູ້ຢືມເງິນຈາກກອງທຶນພັດທະນາແຂວງໄຊສົມບູນ ເຊິ່ງມີຟາມ ໄກ່, ຟາມໝູ, ໜອງປາ ແລະ ອື່ນໆ.

**(ນາງ ອຳໄພພອນ ແກ້ວວິໄລ)**



## ພທ. ສຸວອນ ...

(ຕໍ່ຈາກໜ້າ 1)

ເມືອງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ອົງການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນ.

ໃນການເຄື່ອນໄຫວ, ໄດ້ຮັບຟັງລາຍງານສະພາບການຈັດຕັ້ງປະຕິບັດວຽກງານຂອງບ້ານໃນໄລຍະຜ່ານມາ ເຊິ່ງຍົກໃຫ້ເຫັນຄວາມເອົາໃຈໃສ່ໃນການສຶກສາອົບຮົມການເມືອງ-ແນວຄິດໃຫ້ພໍ່ແມ່ປະຊາຊົນ, ເຮັດໃຫ້ປະຊາຊົນມີຄວາມເຊື່ອໝັ້ນຕໍ່ການນຳພາຂອງອົງການປົກຄອງບ້ານ ແລະ ມີຄວາມຮັກແພງສາມັກຄີຊ່ວຍເຫຼືອເຊິ່ງກັນແລະກັນ ທັງຍົກໃຫ້ເຫັນດ້ານດີ, ດ້ານອ່ອນ ຂໍ້ຄົງຄ້າງ ທີ່ຈະໄດ້ພ້ອມກັນສຸມໃສ່ແກ້ໄຂໃນຕໍ່ໜ້າ; ຈາກນັ້ນ, ກໍພ້ອມກັນແລກປ່ຽນຄຳຄິດຄຳເຫັນ ແລະ ຄຳສະເໜີຕໍ່ການຈັດຕັ້ງປະຕິບັດວຽກງານຕ່າງໆ ເພື່ອນຳໄປພິຈາລະນາ ແລະ ສະເໜີຕໍ່ອົງການທີ່ກ່ຽວຂ້ອງແກ້ໄຂໃນຕໍ່ໜ້າ.

ທ່ານ ພທ. ສຸວອນ ເລືອງບຸນມີ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ຍາດໄດ້ໃນໄລຍະຜ່ານມາ ພ້ອມທັງເນັ້ນໜັກໃຫ້ເອົາໃຈໃສ່ບັນດາປັດໄຈຕັດສິນໃນການພັດທະນາເສດຖະກິດຢູ່ເຂດຫ່າງໄກສອກຫຼີກ ແລະ ບັນດາຄາດໝາຍໃນການຈັດຕັ້ງປະຕິບັດວຽກງານ 3 ສ້າງ ເພື່ອແກ້ໄຂບັນດາຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນບັນດາເຜົ່າ, ເນັ້ນໜັກໃຫ້ເຂັ້ມງວດໃນການປະຕິບັດຕາມລັດຖະທຳມະນູນ ແລະກົດໝາຍ, ຍົກໃຫ້ເຫັນເຖິງຄວາມໝາຍຄວາມສຳຄັນຂອງວຽກງານ 3 ສ້າງ ແລະ 4 ດ້ານ ອັນເປັນຮາກຖານສຳຄັນຂອງການພັດທະນາປະເທດຊາດ; ພ້ອມນັ້ນ, ຍັງໄດ້ເນັ້ນໜັກໃຫ້ສືບຕໍ່ຮັກສາຄວາມສາມັກຄີໃຫ້ແໜ້ນແຟ້ນເປັນຈິດໜຶ່ງໃຈດຽວເພື່ອພ້ອມກັນເຮັດໜ້າທີ່ປົກປັກຮັກສາແລະສ້າງສາປະເທດຊາດໃນເງື່ອນໄຂທີ່ຍັງມີຄວາມຫຍຸ້ງຍາກແລະກ້າວຂຶ້ນເປັນບ້ານພັດທະນາຢ່າງແທ້ຈິງໃນອະນາຄົດ.

ການເຄື່ອນໄຫວຄັ້ງນີ້, ຍັງໄດ້ນຳເອົາອຸປະກອນການສຶກສາ, ເຂົ້າສານ, ເຄື່ອງນຸ່ງຫົ່ມແລະເຄື່ອງໃຊ້ໃນຄົວເຮືອນຈຳນວນໜຶ່ງ ມອບໃຫ້ບ້ານ ແລະ ໂຮງຮຽນ ທີ່ຖືກຜົນກະທົບຈາກໄພນ້ຳຖ້ວມ ແລະ ອັກຄີໄພ ໃນໄລຍະຜ່ານມາ.

ໂອກາດດຽວກັນ, ທ່ານ ພທ. ສຸວອນ ເລືອງບຸນມີ ຍັງໄດ້ເຂົ້າຮ່ວມມະຫະກຳບຸນຊ້າງແຂວງໄຊຍະບູລີ ຄັ້ງທີ 18 ປະຈຳປີ 2025 ອີກດ້ວຍ.

**(ນາງ ອາລິນ ສຸພົມມະປະດິດ)**

## ສສຊ...

(ຕໍ່ຈາກໜ້າ 1)

ຊຳເໜືອ; ເຂົ້າຮ່ວມຮັບຟັງມີອຳນາດການປົກຄອງ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນບ້ານ.

ຫຼັງຈາກຮັບຟັງການລາຍງານໂດຍຫຍໍ້ຂອງນາຍບ້ານ ກ່ຽວກັບສະພາບທີ່ຕັ້ງ, ຈຸດພິເສດທາງດ້ານການເມືອງ-ແນວຄິດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພັດທະນາເສດຖະກິດ-ສັງຄົມ ແລະ ທິດທາງແຜນການໃນຕໍ່ໜ້າ; ສສຊແລະສສຂ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ທີ່ຕິດພັນກັບເນື້ອໃນມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ, ມະຕິກອງປະຊຸມຄົບຄະນະຄັ້ງທີ 9 ຂອງຄະນະບໍລິຫານສູນກາງພັກ ສະໄໝທີ XI, ຄຳແນະນຳກ່ຽວກັບການຍື່ນຄຳຮ້ອງທຸກ ແລະ ບັນຫາຕ່າງໆທີ່ຕິດພັນກັບຜົນປະໂຫຍດຂອງປະຊາຊົນ. ການເຄື່ອນໄຫວຄັ້ງນີ້, ຍັງເປັນການຕິດຕາມກວດກາ ແລະ ເກັບກຳສະພາບການ, ຄຳຄິດຄຳເຫັນ ແລະ ຄຳສະເໜີຂອງປະຊາຊົນ.

ຄະນະສະມາຊິກສະພາ ໄດ້ມອບປຶ້ມຂຽນ ແລະ ຜ້າຫົ່ມຈຳນວນໜຶ່ງ ລວມມູນຄ່າ 11 ລ້ານກວ່າກີບ ໃຫ້ບັນດາບ້ານເປົ້າໝາຍອີກດ້ວຍ.

**(ໄຊກີ)**



## ສຳເລັດ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມສະໄໝວິສາມັນຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ທີ່ດຳເນີນແຕ່ວັນທີ 24-25 ກຸມພາ 2025 ໄດ້ປິດລົງດ້ວຍຜົນສຳເລັດອັນຈົບງາມທີ່ສຳນັກງານສູນກາງພັກ, ພາຍໃຕ້ການເປັນປະທານຂອງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ.

ໃນໂອກາດກ່າວເປີດກອງປະຊຸມ, ສະຫາຍ ທອງລຸນ ສີສຸລິດ ໄດ້ມີຄຳເຫັນເນັ້ນໜັກວ່າ: ການທີ່ສູນກາງພັກ ໄດ້ນຳເອົາບັນຫາສຳຄັນມາຄົ້ນຄວ້າ, ອະພິປາຍ, ປຶກສາຫາລືແລະຕົກລົງໃນກອງປະຊຸມສະໄໝວິສາມັນຄັ້ງນີ້ ແມ່ນຄວາມຈຳເປັນເພື່ອຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ ກ່ຽວກັບການສືບຕໍ່ບູລະນະລັດປະຊາທິປະໄຕປະຊາຊົນ ໃຫ້ສົມບູນຍິ່ງຂຶ້ນ ເຊິ່ງເປັນການຈັດຕັ້ງປະຕິບັດໂດຍກົງມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກເຮົາ ກໍຄືບັນດາມະຕິຂອງສູນກາງພັກໃນໄລຍະຜ່ານມາໃຫ້ເຂົ້າສູ່ລວງເລິກ ແລະ ໃຫ້ເປັນຮູບປະທຳຕົວຈິງ, ກະກຽມເງື່ອນໄຂພື້ນຖານ ແລະ ຄວາມພ້ອມດ້ານຕ່າງໆ ໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກໃນຕົ້ນປີ 2026; ປຶກສາຫາລື, ຕົກລົງ ແລະ ຮັບຮອງເອົາທິດທາງ, ບັນຫາໃຫຍ່ໆຈຳນວນໜຶ່ງເພື່ອຮອງຮັບການຈັດຕັ້ງປະຕິບັດຢ່າງເປັນເອກະພາບກັນ ພາຍຫຼັງສຳເລັດກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ; ປັບປຸງກົງຈັກການຈັດຕັ້ງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນເພື່ອໃຫ້ສອດຄ່ອງຕາມຫຼັກວິທະຍາສາດ ທັງເປັນການສືບຕໍ່ບູລະນະແນວທາງປ່ຽນແປງໃໝ່ ເຂົ້າສູ່ລວງເລິກ, ໃຫ້ມີຄວາມສອດຄ່ອງກັບສະພາບຈຸດພິເສດ ແລະ ລັກສະນະຂອງການປະຕິວັດຂອງພັກເຮົາໃນເງື່ອນໄຂໃໝ່.

ກອງປະຊຸມສະໄໝວິສາມັນຄັ້ງນີ້ ມີຄວາມໝາຍສຳຄັນ ແລະ ມີລັກສະນະ "ພິເສດ"; ຄະນະບໍລິຫານງານສູນກາງພັກໄດ້ພ້ອມກັນຮັບຟັງລາຍງານ, ປຶກສາຫາລື, ຕີລາຄາ ແລະ ມີທິດຊີ້ນຳຕໍ່ແຕ່ລະບັນຫາທີ່ຍົກຂຶ້ນຢ່າງເລິກເຊິ່ງ, ພາວະວິໄສ, ກົງໄປກົງມາ. ກອງປະຊຸມມີຄວາມເປັນເອກະພາບໃນລະດັບສູງ ຕົກລົງຮັບຮອງເອົາບັນຫາສຳຄັນທີ່ເປັນແນວທາງການຈັດຕັ້ງຂອງພັກ ດັ່ງນີ້:

1. ເຫັນດີຮັບຮອງດ້ານຫຼັກການ ກ່ຽວກັບການປັບປຸງລັດຖະທຳມະນູນ ສະບັບປີ 2015 ແລະ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ; ມອບໃຫ້ຄະນະຮັບຜິດຊອບການປັບປຸງລັດຖະທຳມະນູນ ແລະ ກົດໝາຍທີ່ກ່ຽວຂ້ອງສືບຕໍ່ຄົ້ນຄວ້າ, ປັບປຸງຕາມທິດຊີ້ນຳຂອງກອງປະຊຸມ ແລະ ນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມສະໄໝວິສາມັນເທື່ອທີ 2 ທີ່ຈະໄຂຂຶ້ນໃນກາງເດືອນມີນາທີ່ຈະມາເຖິງນີ້.

2. ຮັບຮອງເອົາທິດທາງ, ນະໂຍບາຍ ໃນການສ້າງຕັ້ງອົງການປົກຄອງທ້ອງຖິ່ນຂັ້ນຕາແສງເປັນອົງການປົກຄອງຂັ້ນຕ່ຳສຸດ; ມອບໃຫ້ລັດຖະບານ, ອົງການກ່ຽວຂ້ອງຂອງລັດ, ຄະນະພັກ, ອົງການປົກຄອງທ້ອງຖິ່ນ ປະສານສົມທົບກັນ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ, ສ້າງເງື່ອນໄຂເອື້ອອຳນວຍ, ການເສີມຂະຫຍາຍທ່າແຮງ ແລະ ຄວາມສາມາດບົ່ມຊ້ອນ ເຮັດໃຫ້ທ້ອງຖິ່ນ-ຮາກຖານ ໄດ້ຮັບການພັດທະນາ, ຍົກລະດັບຂຶ້ນຢ່າງບໍ່ຢຸດຢັ້ງ.

3. ເຫັນດີປັບປຸງກົງຈັກການຈັດຕັ້ງຂອງບາງກະຊວງ, ອົງການຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ; ມອບໃຫ້ຄະນະປັບປຸງກົງຈັກການຈັດຕັ້ງ ສົມທົບກັບລັດຖະບານ ເພື່ອກະກຽມນຳສະເໜີສະພາແຫ່ງຊາດ ພິຈາລະນາຮັບຮອງເອົາ.

4. ກອງປະຊຸມສູນກາງໄດ້ໃຫ້ທິດຊີ້ນຳການສືບຕໍ່ກະກຽມກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ດ້ານຂະບວນການ, ເນື້ອໃນ ແລະ ບຸຄະລາກອນ.

ຜົນສຳເລັດຂອງກອງປະຊຸມສະໄໝວິສາມັນໃນຄັ້ງນີ້, ສ່ອງແສງຄວາມສາມັກຄີເປັນປຶກແຜ່ນ, ຄວາມເອກະພາບໜັກແໜ້ນພາຍໃນສູນກາງພັກ ໃນການສືບຕໍ່ນຳພາຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານມີຫຼັກການຂອງພັກເຮົາ ເຂົ້າສູ່ລວງເລິກ ໂດຍສະເພາະການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ເພື່ອກະກຽມກ້າວເຂົ້າສູ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ດ້ວຍບາດກ້າວອັນໜັກແໜ້ນ.

ກອງປະຊຸມມອບໃຫ້ກົມການເມືອງ, ຄະນະເລຂາທິການສູນກາງພັກເປັນໃຈກາງໃນການຊີ້ນຳ-ນຳພາ-ບັນຊາວຽກງານຈຸດສຸມຕ່າງໆດັ່ງນີ້:

1. ຍູ້ແຮງຂະບວນການປະຕິບັດມະຕິ XI ຂອງພັກ ໂດຍຖືເອົາການປັບປຸງກົງຈັກການຈັດຕັ້ງຕິດພັນກັບການກະກຽມແລະດຳເນີນກອງປະຊຸມໃຫຍ່ອົງຄະນະພັກກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ ກໍຄືຂະບວນການກະກຽມສະເຫຼີມສະຫຼອງວັນສຳຄັນປະຫວັດສາດຂອງພັກ-ຂອງຊາດ ໃນປີ 2025 ໂດຍສະເພາະແມ່ນວັນສ້າງຕັ້ງພັກຄົບຮອບ 70 ປີ, ວັນສະຖາປະນາ ສປປລາວ ຄົບຄອບ 50 ປີ ແລະ ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ ໃຫ້ກາຍເປັນຂະບວນການຕົວຈິງໃນທົ່ວສັງຄົມ.

2. ຍົກສູງຄວາມຮັບຜິດຊອບການເມືອງຂອງຄະນະພັກແຕ່ລະຂັ້ນ, ເອົາໃຈໃສ່ການແກ້ໄຂບັນຫາຢ່າງມີຈຸດສຸມ ແລະ ໃຫ້ເປັນລະບົບກວ່າເກົ່າ ໂດຍມີການກຳນົດຂອບເວລາໃນການຈັດຕັ້ງແກ້ໄຂບັນຫາຕ່າງໆ ໃຫ້ຕົກໄປ, ບໍ່ປະໃຫ້ແກ່ຍາວ, ຕ້ອງເດັດດ່ຽວແກ້ໄຂໃຫ້ທັນການ.

3. ສືບຕໍ່ກະກຽມເນື້ອໃນຕ່າງໆຂອງກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກເປັນຕົ້ນຮ່າງລາຍງານການເມືອງ, ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X, ໂຄງການການເມືອງຂອງພັກ, ສະຫຼຸບ 40 ປີ ການປະຕິບັດແນວທາງປ່ຽນແປງໃໝ່.

4. ຜັນຂະຫຍາຍໝາກຜົນຂອງການປະຕິບັດແນວທາງການຕ່າງປະເທດຂອງພັກເຮົາ, ການຮ່ວມມືກັບຕ່າງປະເທດ ກໍຄືບັນດາສົນທິສັນຍາ ແລະ ສັນຍາຕ່າງໆທີ່ພັກ-ລັດ ໄດ້ເຊັນກັບພັກອ້າຍນ້ອງ, ບັນດາໂຄງການໃຫຍ່ທີ່ສຳຄັນທີ່ໄດ້ຕົກລົງເປັນເອກະພາບກັບປະເທດຕ່າງໆ ແລະ ບັນດາອົງການຈັດຕັ້ງສາກົນ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີຜົນສຳເລັດ, ຮີບຮ້ອນແກ້ໄຂຂັ້ນຕອນ, ລະບຽບການທີ່ຍັງອັດຕັນການລົງທຶນ, ການຜະລິດ-ທຸລະກິດ ໃຫ້ຄ່ອງຕົວຂຶ້ນ.

5. ກະຊວງ, ອົງການ ແລະ ທ້ອງຖິ່ນ ເປັນເຈົ້າການ ແລະ ເອົາໃຈໃສ່ຊີ້ນຳຮີບຮ້ອນເຜີຍແຜ່, ເຊື່ອມຊຶມ ໃຫ້ຄະນະພັກ, ສະມາຊິກພັກ-ພະນັກງານ ກໍຄືປະຊາຊົນ ໄດ້ຮັບຮູ້, ເຂົ້າໃຈ ແລະ ກຳແໜ້ນນະໂຍບາຍ, ທິດຊີ້ນຳຂອງສູນກາງພັກ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ກອງປະຊຸມຮຽກຮ້ອງໄປຍັງຄະນະພັກ, ສະມາຊິກພັກ, ພະນັກງານ-ລັດຖະກອນ ແລະ ທົ່ວປວງຊົນລາວທັງຊາດຈົ່ງພ້ອມກັນເພີ່ມທະວີສາມັກຄີເປັນຈິດໜຶ່ງໃຈດຽວ, ເສີມຂະຫຍາຍນ້ຳໃຈຮັກຊາດ, ຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ຕັ້ງໜ້າປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ກໍຄືຍູ້ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໃຫ້ແຂງແຮງ, ຟົດຟື້ນ ແລະ ມີຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ.

**(ຫ້ອງວ່າການສູນກາງພັກ)**

## ຮ່າງລັດຖະທຳມະນູນ...

(ຕໍ່ຈາກສະບັບກ່ອນ)

**ມາດຕາ 38**

ພົນລະເມືອງລາວ ຍິງ-ຊາຍ ມີສິດເທົ່າທຽມກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ຄອບຄົວ.

**ມາດຕາ 39**

ພົນລະເມືອງລາວ ມີສິດໄດ້ຮັບການສຶກສາ ຄົ້ນຄວ້າ, ຮ່ຳຮຽນ ເພື່ອພັດທະນາຕົນເອງ ໃຫ້ມີຄວາມກ້າວໜ້າ.

**ມາດຕາ 40**

ພົນລະເມືອງລາວ ມີສິດເຮັດວຽກ ແລະ ປະກອບອາຊີບທີ່ບໍ່ຂັດກັບກົດໝາຍ.

ຜູ້ອອກແຮງງານ ມີສິດໄດ້ຮັບການພັກຜ່ອນ, ໄດ້ຮັບການປິ່ນປົວໃນເວລາເຈັບເປັນ, ໄດ້ຮັບການຊ່ວຍເຫຼືອ ໃນກໍລະນີ ໝົດຄວາມສາມາດອອກແຮງງານ, ເສຍອົງຄະ, ໃນເວລາເຖົ້າແກ່ ແລະ ໃນກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 41**

ພົນລະເມືອງລາວ ມີສິດເສລີພາບໃນການຕັ້ງພູມລຳເນົາແລະໃນການໄປມາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 42**

ພົນລະເມືອງລາວ ມີສິດສະເໜີ, ຮ້ອງຟ້ອງ ແລະ ຮ້ອງຂໍຄວາມເປັນທຳ ຕໍ່ອົງການທີ່ກ່ຽວຂ້ອງກ່ຽວກັບບັນຫາທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດລວມ ຫຼື ສິດ ແລະ ຜົນປະໂຫຍດສະເພາະຂອງຕົນ.

ຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ຕ້ອງໄດ້ຮັບການພິຈາລະນາ ແລະ ແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 43**

ພົນລະເມືອງລາວ ມີສິດໂດຍບໍ່ມີໃຜຈະລ່ວງລະເມີດໄດ້ທາງດ້ານຊີວິດ, ຮ່າງກາຍ, ກຽດສັກສີ ແລະ ເຄຫະ ສະຖານ.

ພົນລະເມືອງລາວ ຈະບໍ່ຖືກ ຈັບຕົວ, ກັກຂັງ ຫຼື ກວດຄົ້ນເຄຫະສະຖານ ຖ້າຫາກບໍ່ມີຄຳສັ່ງ ຂອງ ອົງການໄອຍະການ ຫຼື ສານປະຊາຊົນ ເວັ້ນເສຍແຕ່ໃນກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 44**

ພົນລະເມືອງລາວ ມີສິດເສລີພາບໃນການເຊື່ອຖື ຫຼື ບໍ່ເຊື່ອຖືສາສະໜາ ທີ່ບໍ່ຂັດກັບກົດໝາຍ.

**ມາດຕາ 45**

ພົນລະເມືອງລາວ ມີສິດເສລີພາບໃນການປາກເວົ້າ, ຂີດຂຽນ, ໂຮມຊຸມນຸມ, ຈັດຕັ້ງສະມາຄົມ ແລະ ເດີນຂະບວນ ທີ່ບໍ່ຂັດກັບກົດໝາຍ.

**ມາດຕາ 46**

ພົນລະເມືອງລາວ ມີສິດເສລີພາບໃນການຄົ້ນຄວ້າ ແລະ ນຳໃຊ້ຄວາມກ້າວໜ້າທາງດ້ານວິທະຍາສາດ-ເຕັກໂນໂລຊີແລະນະວັດຕະກຳ, ປະດິດສ້າງສິລະປະວັນນະຄະດີ ແລະ ເຄື່ອນໄຫວວັດທະນະທຳ ທີ່ບໍ່ຂັດກັບກົດໝາຍ.

**ມາດຕາ 47 (ປັບປຸງ)**

ລັດ ປົກປ້ອງສິດ ແລະ ຜົນປະໂຫຍດອັນຖືກກົດໝາຍ ຂອງພົນລະເມືອງລາວທີ່ຢູ່ຕ່າງປະເທດ.

ຄົນລາວທີ່ອາໄສຢູ່ຕ່າງປະເທດ ແມ່ນພາກສ່ວນໜຶ່ງທີ່ບໍ່ແຍກອອກຈາກວົງຄະນະຍາດແຫ່ງຊາດລາວ.

ລັດ ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ຄົນລາວທີ່ອາໄສຢູ່ຕ່າງປະເທດປົກປັກຮັກສາ ແລະ ເສີມຂະຫຍາຍວັດທະນະທຳອັນດີງາມຂອງຊາດລາວ, ຮັກສາການພົວພັນທີ່ດີກັບຄອບຄົວ, ຍາດພີ່ນ້ອງ ແລະ ບ້ານເກີດເມືອງນອນຂອງຕົນ, ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ.

**ມາດຕາ 48**

ພົນລະເມືອງລາວ ມີພັນທະເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ, ປະຕິບັດລະບຽບການອອກແຮງງານ, ລະບຽບການດຳລົງຊີວິດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມຢ່າງເຂັ້ມງວດ.

**ມາດຕາ 49**

ພົນລະເມືອງລາວ ມີພັນທະເສຍພາສີ ແລະ ອາກອນ ຕາມກົດໝາຍ.

**ມາດຕາ 50**

ພົນລະເມືອງລາວ ມີພັນທະປົກປັກຮັກສາປະເທດຊາດແລະປ້ອງກັນຄວາມສະຫງົບ, ປະຕິບັດພັນທະການທະຫານຕາມກົດໝາຍ.

**ມາດຕາ 51 (ປັບປຸງ)**

ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ມີສິດໄດ້ຮັບການປົກປ້ອງສິດ ແລະ ເສລີພາບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ມີສິດສະເໜີ, ຮ້ອງຟ້ອງ, ຮ້ອງຂໍຄວາມເປັນທຳ ຕໍ່ອົງການລັດທີ່ກ່ຽວຂ້ອງ, ມີພັນທະເຄົາລົບລັດຖະທຳມະນູນ ແລະ ກົດໝາຍຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຄົນຕ່າງປະເທດ ທີ່ມີຄຸນງາມຄວາມດີ ແລະ ຜົນງານອັນໃຫຍ່ຫຼວງເປັນພິເສດ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ມີສິດໄດ້ຮັບນາມມະຍົດພົນລະເມືອງກິດຕິມະສັກ ຂອງສາທາ ລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 52**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອະນຸຍາດການລີ້ໄພໃຫ້ແກ່ຄົນຕ່າງປະເທດ ທີ່ຖືກປາບປາມ ຍ້ອນໄດ້ທຳການຕໍ່ສູ້ເພື່ອອິດສະລະພາບ, ຄວາມເປັນທຳ, ສັນຕິພາບ ແລະ ພາລະກິດວິທະຍາສາດ.

### ໝວດທີ V
### ສະພາແຫ່ງຊາດ

**ມາດຕາ 53**

ສະພາແຫ່ງຊາດ ແມ່ນ ອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວ ບັນດາເຜົ່າ, ເປັນອົງການສູງສຸດແຫ່ງອຳນາດລັດ, ເປັນອົງການນິຕິບັນຍັດ ປະຕິບັດພາລະບົດບາດຮັບຮອງເອົາລັດຖະທຳມະນູນ ແລະ ກົດໝາຍ, ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດ.

**ມາດຕາ 54 (ປັບປຸງ)**

ສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາລັດຖະທຳມະນູນແລະກົດໝາຍ;
2. ພິຈາລະນາ, ຮັບຮອງເອົາ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ການດັດແກ້ແຜນງົບປະມານແຫ່ງລັດ;
3. ພິຈາລະນາ, ຮັບຮອງເອົາ ນະໂຍບາຍພື້ນຖານດ້ານ ການເງິນ, ເງິນຕາ, ອັດຕາສ່ວນ ການຂາດດຸນງົບປະມານ, ອັດຕາສ່ວນໜີ້ສິນຂອງລັດຖະບານ, ອັດຕາສ່ວນໜີ້ສິນສາທາລະນະ;
4. ພິຈາລະນາ, ຮັບຮອງເອົາ ການກຳນົດ, ການປ່ຽນແປງ, ການລົບລ້າງ ຫຼື ການຍົກເວັ້ນ ອັດຕາ ພາສີ ແລະ ອາກອນ;
5. ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດ;
6. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ແລະ ກຳມະການຄະນະປະຈຳ ສະພາແຫ່ງຊາດ;
7. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານປະເທດ ແລະ ຮອງປະທານປະເທດຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
8. ເລືອກຕັ້ງ ຫຼື ປົດຕຳແໜ່ງ ນາຍົກລັດຖະມົນຕີ ຕາມການສະເໜີຂອງປະທານປະເທດ;
9. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານອົງການກວດກາແຫ່ງລັດແລະຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ປະທານອົງການກວດສອບແຫ່ງລັດ ຕາມການສະເໜີຂອງປະທານປະເທດ;
10. ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານກຳມາທິການ ແລະ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
11. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ ຕາມການສະເໜີຂອງນາຍົກ ລັດຖະມົນຕີ;
12. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ສະມາຊິກສະພາຜູ້ພິພາກສາຂອງສານປະຊາຊົນສູງສຸດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ;
13. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກ ຂອງສະພາແຫ່ງຊາດ, ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ກຳມາທິການ ແລະ ຫ້ອງວ່າການ ສະພາແຫ່ງຊາດ;
14. ພິຈາລະນາ, ຮັບຮອງເອົາໂຄງປະກອບກົງຈັກຂອງລັດຖະບານ, ການສ້າງຕັ້ງ, ຍຸບເລີກ, ໂຮມເຂົ້າ, ແຍກອອກ ກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງ, ແຂວງ, ນະຄອນຂຶ້ນກັບສູນກາງ ຕາມການສະເໜີ ຂອງນາຍົກລັດຖະມົນຕີ;
15. ພິຈາລະນາ, ຮັບຮອງເອົາເຂດແດນຂອງ ນະຄອນຫຼວງ, ແຂວງ, ນະຄອນຂຶ້ນກັບສູນກາງ ຕາມການ ສະເໜີຂອງນາຍົກລັດຖະມົນຕີ;
16. ພິຈາລະນາຍຸບ ສະພາປະຊາຊົນທ້ອງຖິ່ນ ໃນກໍລະນີສະພາປະຊາຊົນນັ້ນ ຫາກໄດ້ສ້າງ ຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນ;
17. ພິຈາລະນາ, ຮັບຮອງເອົາການໃຫ້ນິລະໂທດກຳ ຕາມການສະເໜີຂອງ ຄະນະປະຈຳສະພາແຫ່ງຊາດ;
18. ພິຈາລະນາ, ຮັບຮອງເອົາ ການໃຫ້ສັດຕະຍາບັນ, ການເຂົ້າຮ່ວມເປັນພາຄີ ຫຼື ການຍົກເລີກ ສົນທິ ສັນຍາ ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີ ຊຶ່ງພົວພັນກັບບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມການສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ;
19. ພິຈາລະນາ, ຮັບຮອງເອົາບັນຫາສົງຄາມ ຫຼື ສັນຕິພາບ ຕາມການສະເໜີຂອງປະທານປະເທດ;
20. ຍົກເລີກນິຕິກຳຂອງພາກສ່ວນຕ່າງໆທີ່ຂັດກັບ ລັດຖະທຳມະນູນ ແລະ ກົດໝາຍ, ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີ ຂອງ ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ.

**ມາດຕາ 55**

ສະພາແຫ່ງຊາດແຕ່ລະຊຸດ ມີອາຍຸການ ຫ້າປີ.

ສະມາຊິກສະພາແຫ່ງຊາດ ແມ່ນ ພົນລະເມືອງລາວເປັນຜູ້ເລືອກຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ຕ້ອງໃຫ້ແລ້ວພາຍໃນ ຫົກສິບວັນ ກ່ອນສະພາແຫ່ງຊາດ ຊຸດເກົ່າຈະໝົດອາຍຸການ. ໃນກໍລະນີເກີດສົງຄາມ ຫຼື ດ້ວຍສາເຫດອື່ນ ຊຶ່ງກໍ່ຄວາມຫຍຸ້ງຍາກໃຫ້ແກ່ການເລືອກຕັ້ງນັ້ນ ສະພາແຫ່ງຊາດ ອາດຈະຕໍ່ອາຍຸການຂອງຕົນກໍໄດ້ ແຕ່ຕ້ອງດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ຢ່າງຊ້າບໍ່ໃຫ້ເກີນ ຫົກເດືອນ ພາຍຫຼັງສະພາບການໄດ້ກັບຄືນສູ່ປົກກະຕິ. ຖ້າມີຄວາມຈຳເປັນ ກໍສາມາດດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ກ່ອນໝົດອາຍຸການຂອງຕົນກໍໄດ້ ແຕ່ຕ້ອງໄດ້ຮັບຄວາມເຫັນດີຢ່າງໜ້ອຍສອງສ່ວນສາມຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 56 (ປັບປຸງ)**

ຄະນະປະຈຳສະພາແຫ່ງຊາດ ແມ່ນອົງການປະຈຳການ ຂອງສະພາແຫ່ງຊາດ, ປະຕິບັດໜ້າທີ່ແທນສະພາແຫ່ງຊາດ ໃນເວລາສະພາແຫ່ງຊາດ ບໍ່ໄດ້ເປີດກອງປະຊຸມ.

ຄະນະປະຈຳສະພາແຫ່ງຊາດ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ.

ປະທານແລະຮອງປະທານສະພາແຫ່ງຊາດເປັນທັງປະທານ ແລະ ຮອງປະທານ ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 57 (ປັບປຸງ)**

ຄະນະປະຈຳສະພາແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກະກຽມ ແລະ ຮຽກໂຮມກອງປະຊຸມສະພາແຫ່ງຊາດ;
2. ສະເໜີສ້າງ, ຕີຄວາມໝາຍ, ອະທິບາຍ ລັດຖະທຳມະນູນ ແລະ ກົດໝາຍ;
3. ສະເໜີຮ່າງລັດຖະບັນຍັດຕໍ່ປະທານປະເທດ;
4. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ພິພາກສາຂອງສານປະຊາຊົນ ແລະ ປະທານສານປະຊາຊົນພາກ ຕາມການສະເໜີ ຂອງປະທານສານປະຊາຊົນສູງສຸດ;
5. ແຕ່ງຕັ້ງ ຄະນະກຳມະການໄອຍະການປະຊາຊົນສູງສຸດ ແລະ ພາກ ຕາມການສະເໜີຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ;
6. ແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ;
7. ຕົກລົງກ່ຽວກັບ ການໃຫ້ສັດຕະຍາບັນ, ການເຂົ້າຮ່ວມເປັນພາຄີ ຫຼື ການຍົກເລີກ ສົນທິສັນຍາ ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີ ຕາມການສະເໜີ ຂອງນາຍົກລັດຖະມົນຕີ;
8. ຮັບ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳຂອງພົນ

ອ່ານຕໍ່ໜ້າ 7

## ຮ່າງລັດຖະທຳມະນູນ...

(ອ່ານຕໍ່ຈາກໜ້າ 6)

ລະເມືອງ.

**ມາດຕາ 58 (ປັບປຸງ)**

ສະພາແຫ່ງຊາດ ເປີດກອງປະຊຸມສະໄໝສາມັນປີລະສອງເທື່ອ, ຄະນະປະຈຳສະພາແຫ່ງຊາດ ອາດຈະຮຽກໂຮມກອງປະຊຸມສະໄໝວິສາມັນກໍໄດ້ ຖ້າເຫັນວ່າມີຄວາມຈຳເປັນ <u>ແລະ ຮີບດ່ວນ.</u>

ກອງປະຊຸມສະພາແຫ່ງຊາດ ຈະດຳເນີນໄດ້ກໍຕໍ່ເມື່ອມີສະມາຊິກສະພາແຫ່ງຊາດ ເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທັງໝົດ.

**ມາດຕາ 59 (ປັບປຸງ)**

ມະຕິຂອງກອງປະຊຸມສະພາແຫ່ງຊາດ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ ເວັ້ນເສຍແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນມາດຕາ <u>55, 67, 69</u> ແລະ ມາດຕາ <u>121</u> ຂອງລັດຖະທຳມະນູນ.

**ມາດຕາ 60 (ປັບປຸງ)**

ການຈັດຕັ້ງ ທີ່ມີສິດສະເໜີສ້າງກົດໝາຍ ມີ ດັ່ງນີ້:

1. ປະທານປະເທດ;
2. ຄະນະປະຈຳສະພາແຫ່ງຊາດ;
3. ລັດຖະບານ;
4. ສານປະຊາຊົນສູງສຸດ;
5. ອົງການໄອຍະການປະຊາຊົນສູງສຸດ;
6. ອົງການກວດສອບແຫ່ງລັດ;
7. <u>ອົງການກວດກາແຫ່ງລັດ;</u>
8. ແນວລາວສ້າງຊາດ, <u>ສະຫະພັນນັກຮົບເກົ່າລາວ</u> ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ.

**ມາດຕາ 61 (ປັບປຸງ)**

ກົດໝາຍທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາແລ້ວນັ້ນ ຕ້ອງໄດ້ປະກາດໃຊ້ໂດຍປະທານປະເທດ ຢ່າງຊ້າບໍ່ໃຫ້ເກີນ ສາມສິບວັນ ນັບແຕ່ວັນ ໄດ້ຮັບຮອງເປັນຕົ້ນໄປ. ໃນໄລຍະເວລາດັ່ງກ່າວນັ້ນ ປະທານປະເທດ ມີສິດສະເໜີໃຫ້ສະພາແຫ່ງຊາດ ພິຈາລະນາຄືນໃໝ່, ກົດໝາຍທີ່ໄດ້ນຳມາພິຈາລະນາຄືນໃໝ່ນັ້ນ ຖ້າວ່າສະພາແຫ່ງຊາດ ຫາກຍັງຕົກລົງຢັ້ງຢືນເອົາຕາມເດີມແລ້ວ ປະທານປະເທດ ກໍຕ້ອງປະກາດໃຊ້ພາຍໃນກຳນົດ ສິບຫ້າວັນ.

ກົດໝາຍທີ່ປະທານປະເທດປະກາດໃຊ້ແລ້ວນັ້ນ <u>ຕ້ອງ</u>ໄດ້ລົງໃນຈົດໝາຍເຫດທາງລັດຖະການ, ຍົກເວັ້ນກໍລະນີ ທີ່ກົດໝາຍໄດ້ກຳນົດໄວ້ສະເພາະ.

**ມາດຕາ 62**

ບັນຫາທີ່ກ່ຽວພັນເຖິງຊາຕາກຳຂອງປະເທດຊາດ ແລະ ຜົນປະໂຫຍດອັນໃຫຍ່ຫຼວງຂອງປະຊາຊົນ ຕ້ອງໄດ້ຮັບການຄົ້ນຄວ້າພິຈາລະນາຈາກສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 63**

ສະພາແຫ່ງຊາດ ສ້າງຕັ້ງບັນດາກຳມາທິການຂອງຕົນ ຊຶ່ງມີໜ້າທີ່ພິຈາລະນາຮ່າງກົດໝາຍ ແລະ ຮ່າງລັດຖະບັນຍັດ ແລ້ວສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພ້ອມທັງຊ່ວຍສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ປະຕິບັດສິດໃນການຕິດຕາມກວດກາການເຄື່ອນໄຫວຂອງບັນດາອົງການລັດ.

**ມາດຕາ 64 (ປັບປຸງ)**

ສະມາຊິກສະພາແຫ່ງຊາດ ມີສິດຊັກຖາມ <u>ປະທານປະເທດ, ປະທານສະພາແຫ່ງຊາດ,</u> ນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, <u>ປະທານອົງການກວດກາແຫ່ງລັດແລະຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ,</u> ປະທານອົງການກວດສອບແຫ່ງລັດ.

ບຸກຄົນທີ່ຖືກຊັກຖາມນັ້ນ ຕ້ອງຊີ້ແຈງ ຕໍ່ກອງປະຊຸມສະພາແຫ່ງຊາດ ດ້ວຍວາຈາ ຫຼື ເປັນລາຍລັກອັກສອນ.

**ມາດຕາ 65**

ສະມາຊິກສະພາແຫ່ງຊາດ ຈະບໍ່ຖືກດຳເນີນຄະດີອາຍາ ຫຼື ຈັບຕົວ, ກັກຕົວ ແລະ ກັກຂັງ ຖ້າຫາກບໍ່ໄດ້ຮັບຄວາມເຫັນດີຈາກສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ.

ໃນກໍລະນີ ການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນນັ້ນ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຕ້ອງລາຍງານໃນທັນທີໃຫ້ ສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ.

ການສືບສວນ-ສອບສວນ ບໍ່ເປັນສາເຫດພາໃຫ້ສະມາຊິກສະພາແຫ່ງຊາດທີ່ຖືກດຳເນີນຄະດີນັ້ນຂາດປະຊຸມສະພາແຫ່ງຊາດ.

### ໝວດທີ VI
### ປະທານປະເທດ

**ມາດຕາ 66 (ປັບປຸງ)**

ປະທານປະເທດ ເປັນປະມຸກລັດ ແຫ່ງ ສາທາລະນະລັດ ປະຊາທິໄຕ ປະຊາຊົນລາວ, ເປັນຜູ້ຕາງໜ້າປະຊາຊົນລາວບັນດາເຜົ່າທັງຢູ່ພາຍໃນແລະຕ່າງປະເທດ, ເປັນປະທານ<u>ຄະນະກຳມະການ</u>ປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຫ່ງຊາດ, ເປັນແມ່ທັບກຳລັງປະກອບອາວຸດປະຊາຊົນ ເພື່ອຮັບປະກັນຄວາມເປັນເອກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ, ສະຖຽນລະພາບ ແລະ ຄວາມໝັ້ນຄົງ ຂອງປະເທດຊາດ.

**ມາດຕາ 67 (ປັບປຸງ)**

- ປະທານປະເທດ ໄດ້ຮັບການເລືອກຕັ້ງຈາກສະພາແຫ່ງຊາດ ດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.
- ປະທານປະເທດ ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ.
- ປະທານປະເທດ ດຳລົງຕຳແໜ່ງບໍ່ເກີນສອງສະໄໝຕິດຕໍ່ກັນ.
- ປະທານປະເທດ ມີຫ້ອງວ່າການ<u>ສຳນັກງານ</u>ປະທານປະເທດ.

**ມາດຕາ 68 (ປັບປຸງ)**

ປະທານປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍ;
2. ອອກລັດຖະບັນຍັດ ແລະ ລັດຖະດຳລັດ;
3. ຮຽກໂຮມ ແລະ ເປັນປະທານ ກອງປະຊຸມພິເສດຂອງລັດຖະບານ, ເຂົ້າຮ່ວມກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃນກໍລະນີຈຳເປັນ;
4. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ ພາຍຫຼັງສະພາແຫ່ງຊາດໄດ້ຮັບຮອງເອົາ;
5. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານສານປະຊາຊົນສູງສຸດ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, <u>ຮອງປະທານອົງການກວດກາແຫ່ງລັດ ແລະ ຮອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ,</u> ຮອງປະທານອົງການກວດສອບແຫ່ງລັດ ຕາມການສະເໜີຂອງປະທານ ຫຼື ຫົວໜ້າອົງການດັ່ງກ່າວ;
6. ຕົກລົງເລື່ອນຊັ້ນ ຫຼື ປົດຊັ້ນນາຍພົນ ຢູ່ໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາມການສະເໜີຂອງນາຍົກລັດຖະມົນຕີ;
7. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ <u>ແລະ ຮອງຫົວໜ້າ</u> ຫ້ອງວ່າການ<u>ສຳນັກງານ</u>ປະທານປະເທດ;
8. ແຕ່ງຕັ້ງເອກອັກຄະລັດຖະທູດ<u>ວິສາມັນ</u>ຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປປະຈຳຢູ່ຕ່າງປະເທດ ຫຼື ຮຽກກັບຄືນປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ; ຮັບຮອງເອົາ <u>ເອກອັກຄະລັດຖະທູດ ຫຼື</u> ຜູ້ຕາງໜ້າທີ່ມີອຳນາດເຕັມຂອງຕ່າງປະເທດ ທີ່ມາປະຈຳຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; <u>ຕົກລົງ ການປະດັບ, ຫຼຸດ ແລະ ປົດ ຊັ້ນເອກອັກຄະລັດຖະທູດ ຕາມການສະເໜີຂອງນາຍົກລັດຖະມົນຕີ;</u>
9. ປະກາດການແຕ່ງຕັ້ງ ຄະນະກຳມະການເລືອກຕັ້ງລະດັບຊາດ, ວັນເລືອກຕັ້ງ, ຈຳນວນຜູ້ສະໝັກຮັບເລືອກຕັ້ງ, ຈຳນວນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນແຕ່ລະເຂດເລືອກຕັ້ງ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
10. ປະກາດ ສົງຄາມ ຫຼື ສັນຕິພາບ ຕາມການຕົກລົງຂອງສະພາແຫ່ງຊາດ, ຕົກລົງ ລະດົມພົນທົ່ວໄປ ຫຼື ເປັນພາກສ່ວນ, ຕົກລົງພາວະສຸກເສີນໃນທົ່ວປະເທດ ຫຼື ໃນບາງທ້ອງຖິ່ນ;
11. ຕົກລົງມອບ ຫຼື ປະດັບຫຼຽນຄຳແຫ່ງຊາດ, ຫຼຽນກຽດຕິຄຸນ, ຫຼຽນໄຊ, ນາມມະຍົດສູງສຸດ ແຫ່ງລັດ ແລະ ຕົກລົງໃຫ້ການຍ້ອງຍໍດ້ວຍຮູບການອື່ນ ຕາມການສະເໜີຂອງນາຍົກລັດຖະມົນຕີ;
12. ຕົກລົງໃຫ້ອະໄພຍະໂທດ ຕາມການສະເໜີຂອງລັດຖະບານ; ປະກາດໃຫ້ນິລະໂທດກຳພາຍຫຼັງການຮັບຮອງຂອງສະພາແຫ່ງຊາດ;
13. ຕົກລົງໃຫ້ລີ້ໄພການເມືອງແກ່ຄົນຕ່າງປະເທດ;
14. ຕົກລົງໃຫ້ເຈລະຈາ ຫຼື ລົງນາມ; ປະກາດການໃຫ້ສັດຕະຍາບັນ <u>ຫຼື</u> ການເຂົ້າເປັນພາຄີ; ການ<u>ໂຈະສົນທິ</u>ສັນຍາ <u>ໃນນາມສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.</u>

**ມາດຕາ 69**

ປະທານປະເທດ ມີຮອງປະທານປະເທດ ຊຶ່ງສະພາແຫ່ງຊາດເປັນຜູ້ເລືອກຕັ້ງ ໂດຍໄດ້ຮັບຄະແນນສຽງຫຼາຍກວ່າສອງສ່ວນສາມຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ຮອງປະທານປະເທດ ປະຕິບັດໜ້າທີ່ຕາມການມອບໝາຍຂອງປະທານປະເທດ ແລະ ຕາງໜ້າໃຫ້ປະທານປະເທດ ໃນເວລາປະທານປະເທດຕິດຂັດ.

ໃນກໍລະນີປະທານປະເທດ ບໍ່ສາມາດປະຕິບັດໜ້າທີ່ໄດ້, ຮອງປະທານປະເທດ ເປັນຜູ້ຮັກສາການແທນ ຈົນກວ່າສະພາແຫ່ງຊາດ ຈະເລືອກຕັ້ງປະທານປະເທດຜູ້ໃໝ່.

### ໝວດທີ VII
### ລັດຖະບານ

**ມາດຕາ 70**

ລັດຖະບານ ແມ່ນ ອົງການບໍລິຫານ ມີພາລະບົດບາດຄຸ້ມຄອງບໍລິຫານລັດ ຢ່າງຮອບດ້ານ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ.

ລັດຖະບານ ຮັບຜິດຊອບຕໍ່ ສະພາແຫ່ງຊາດ ແລະ ປະທານປະເທດ.

**ມາດຕາ 71 (ປັບປຸງ)**

ລັດຖະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. <u>ຜັນຂະຫຍາຍແນວທາງຂອງພັກ</u>, ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິຄະນະປະຈຳສະພາແຫ່ງຊາດ, ລັດຖະບັນຍັດ ແລະ ລັດຖະດຳລັດຂອງປະທານປະເທດ;
2. ສະເໜີ ຮ່າງກົດໝາຍຕໍ່ສະພາແຫ່ງຊາດ, ຮ່າງລັດຖະບັນຍັດຕໍ່ ຄະນະປະຈຳສະພາແຫ່ງຊາດ, ຮ່າງລັດຖະດຳລັດ ຕໍ່ປະທານປະເທດ;
3. ອອກດຳລັດ, ມະຕິກ່ຽວກັບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ວິທະຍາສາດ-ເຕັກໂນໂລຊີ, ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ;
4. ກຳນົດແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ແລ້ວສະເໜີຕໍ່ສະພາແຫ່ງຊາດ;
5. ສະເໜີ ສະພາແຫ່ງຊາດ ຮັບຮອງເອົາ ການສ້າງຕັ້ງ, ໂຮມເຂົ້າ, ແຍກອອກ ຫຼື ຍຸບເລີກ ກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງ, ແຂວງ, <u>ນະຄອນຂຶ້ນກັບສູນກາງ</u> ແລະ ການກຳນົດເຂດແດນຂອງນະຄອນຫຼວງ, ແຂວງ, <u>ນະຄອນຂຶ້ນກັບສູນກາງ</u>;
6. ຕົກລົງ ສ້າງຕັ້ງ ຫຼື ຍຸບເລີກ ທະບວງ ຫຼື ອົງການລັດທຽບເທົ່າ <u>ທະບວງ;</u>
7. ຕົກລົງ ສ້າງຕັ້ງ ຫຼື ຍຸບເລີກ ເມືອງ, ນະຄອນ, <u>ຕາແສງ</u> ແລະ ກຳນົດເຂດແດນ ຂອງ ເມືອງ, ນະຄອນ, <u>ຕາແສງ</u> ພາຍຫຼັງກອງປະຊຸມສະພາປະຊາຊົນຂັ້ນແຂວງຮັບຮອງເອົາ;
8. ສ້າງຕັ້ງ ຫຼື ຍຸບເລີກ ເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ <u>ແລະ ດ່ານສາກົນ;</u>
9. ຊີ້ນຳ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
10. ຕົກລົງ ໃຫ້ສັນຊາດ, ຖອນສັນຊາດ, ປະສັນຊາດ, ໃຫ້ສັນຊາດລາວຄືນ;
11. ຕົກລົງໃຫ້ຄົນຕ່າງປະເທດເປັນພົນລະເມືອງກິດຕິມະສັກ;
12. <u>ຕົກລົງ ໃຫ້ລົງນາມ; ພິຈາລະນາ ຮັບຮອງ, ເຂົ້າຮ່ວມເປັນພາຄີ ຫຼື ຍົກເລີກ ສົນທິສັນຍາ ໃນນາມລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕາມການສະເໜີຂອງກະຊວງການຕ່າງ ປະເທດ;</u>
13. ງົດການປະຕິບັດ, ລົບລ້າງ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳຂອງກະຊວງ, ອົງການທີ່ຂຶ້ນກັບລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ທີ່ຂັດກັບກົດໝາຍ ແລະ ນິຕິກຳອື່ນ, ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີ ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ;
14. ລາຍງານການເຄື່ອນໄຫວຂອງຕົນຕໍ່ ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະ ປະທານປະເທດ.

ອ່ານຕໍ່ໜ້າ 8

## ຮ່າງລັດຖະທຳມະນູນ...

(ອ່ານຕໍ່ຈາກໜ້າ 7)

**ມາດຕາ 72**

ລັດຖະບານ ປະກອບດ້ວຍ ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີແລະຫົວໜ້າອົງການລັດທຽບເທົ່າກະຊວງ.

ລັດຖະບານ ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ, ສະມາຊິກລັດຖະບານ ດຳລົງຕຳແໜ່ງຢູ່ບ່ອນເກົ່າ ບໍ່ເກີນສອງສະໄໝຕິດຕໍ່ກັນ.

**ມາດຕາ 73 (ປັບປຸງ)**

ນາຍົກລັດຖະມົນຕີເປັນຫົວໜ້າລັດຖະບານ ແລະ ຕາງໜ້າລັດຖະບານນຳພາ, ຊີ້ນຳການເຄື່ອນໄຫວວຽກງານຂອງລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ; ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຮອງລັດຖະມົນຕີ, ຮອງຫົວໜ້າອົງການລັດທຽບເທົ່າກະຊວງ, ຫົວໜ້າທະບວງ, ຮອງຫົວໜ້າທະບວງ, ຫົວໜ້າກົມ; ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ນະຄອນຂຶ້ນກັບສູນກາງ ພາຍຫຼັງກອງປະຊຸມສະພາປະຊາຊົນຂັ້ນແຂວງ ຮັບຮອງເອົາ; ສະເໜີເລື່ອນຊັ້ນ ຫຼື ປົດຊັ້ນນາຍພົນ; ເລື່ອນຊັ້ນ ຫຼື ປົດຊັ້ນພົນເອກ ຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 74 (ປັບປຸງ)**

ຮອງນາຍົກລັດຖະມົນຕີ ຊ່ວຍນາຍົກລັດຖະມົນຕີ ໃນການຊີ້ນຳວຽກງານຂອງລັດຖະບານ ແລະ ອົງການ ປົກຄອງທ້ອງຖິ່ນ, ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງນາຍົກລັດຖະມົນຕີ.

ຮອງນາຍົກລັດຖະມົນຕີທ່ານໃດໜຶ່ງເປັນຜູ້ຮັກສາການແທນໃນເວລາ ນາຍົກລັດຖະມົນຕີ ຕິດຂັດ.

**ມາດຕາ 75**

ລັດຖະມົນຕີກະຊວງ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງມີໜ້າທີ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິຂອງກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ແລະລັດຖະບານ, ຊີ້ນຳ, ຄຸ້ມຄອງ ແລະ ກວດກາການປະຕິບັດວຽກງານຂອງຂະແໜງການທີ່ຕົນຮັບຜິດຊອບ, ພົວພັນຮ່ວມມື, ເຊັນສັນຍາ ແລະ ອະນຸສັນຍາກັບຕ່າງປະເທດ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 76**

ສະມາຊິກລັດຖະບານທ່ານໃດໜຶ່ງ ຫຼື ທັງໝົດຄະນະ ອາດຈະຖືກສະພາແຫ່ງຊາດ ພິຈາລະນາ ແລະ ລົງມະຕິ ບໍ່ໄວ້ວາງໃຈ ຖ້າວ່າຄະນະປະຈຳສະພາແຫ່ງຊາດ ຫຼື ມີຢ່າງໜ້ອຍໜຶ່ງສ່ວນສີ່ຂອງ ຈຳນວນສະມາຊິກສະພາແຫ່ງຊາດທັງໝົດ ຫາກສະເໜີບັນຫານີ້ຂຶ້ນ.

ໃນກໍລະນີສະມາຊິກລັດຖະບານທ່ານໃດໜຶ່ງ ຫຼື ທັງໝົດຄະນະ ຖືກສະພາແຫ່ງຊາດ ລົງມະຕິບໍ່ໄວ້ວາງ ໃຈນັ້ນ ປະທານປະເທດມີສິດສະເໜີໃຫ້ສະພາແຫ່ງຊາດ ພິຈາລະນາຄືນໃໝ່ ຫຼື ຕົກລົງໃຫ້ລາອອກ.

### ໝວດທີ VIII
### ສະພາປະຊາຊົນທ້ອງຖິ່ນ

**ມາດຕາ 77 (ປັບປຸງ)**

ສະພາປະຊາຊົນທ້ອງຖິ່ນ ເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາ ເຜົ່າ, ເປັນໜຶ່ງໃນອົງການອຳນາດລັດຢູ່ທ້ອງຖິ່ນ, ປະຕິບັດພາລະບົດບາດພິຈາລະນາ, ຮັບຮອງເອົານິຕິກຳທີ່ມີຜົນບັງຄັບທົ່ວໄປ, ຕົກລົງບັນຫາພື້ນຖານຂອງທ້ອງຖິ່ນ, ຕິດຕາມກວດກາ ການເຄື່ອນໄຫວ ຂອງບັນດາອົງການລັດໃນທ້ອງຖິ່ນຕົນ.

ສະພາປະຊາຊົນທ້ອງຖິ່ນ ສ້າງຕັ້ງຂຶ້ນຕາມຂັ້ນຂອງການປົກຄອງທ້ອງຖິ່ນ ຊຶ່ງປະກອບດ້ວຍ ສະພາປະຊາຊົນຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ. ສຳລັບສະພາປະຊາຊົນຂັ້ນເມືອງ ແລະ ຂັ້ນຕາແສງ ອາດຈະສ້າງຕັ້ງຂຶ້ນ ຕາມການຕົກລົງຂອງສະພາແຫ່ງຊາດ.

ສະພາປະຊາຊົນທ້ອງຖິ່ນ ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ.

**ມາດຕາ 78 (ປັບປຸງ)**

ສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ການດັດແກ້ແຜນງົບປະມານແຫ່ງລັດ ຂອງທ້ອງຖິ່ນ ຕາມການສະເໜີຂອງ ປະທານຄະນະກຳມະການປົກຄອງ ນະຄອນ ຫຼວງ, ແຂວງ, ນະຄອນຂຶ້ນກັບສູນກາງ;
2. ພິຈາລະນາ, ຮັບຮອງເອົານິຕິກຳທີ່ສຳຄັນຂັ້ນແຂວງ;
3. ຕິດຕາມກວດກາ ການເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ແລະ ກົດໝາຍ ຂອງບັນດາອົງ ການລັດຂອງທ້ອງຖິ່ນຕົນ;
4. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ແລະ ກຳມະການຄະນະປະຈຳ ສະພາປະຊາຊົນຂັ້ນແຂວງ;
5. ພິຈາລະນາ, ຮັບຮອງ ເອົາການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ຄະນະກຳມະການ ແລະ ຫົວໜ້າຫ້ອງວ່າການ ສະພາປະຊາຊົນຂັ້ນແຂວງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
6. ພິຈາລະນາ, ຮັບຮອງເອົາ ກົງຈັກຂອງສະພາປະຊາຊົນຂັ້ນແຂວງ;
7. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ນະຄອນຂຶ້ນກັບສູນກາງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
8. ພິຈາລະນາ, ຮັບຮອງເອົາ ໂຄງປະກອບກົງຈັກຂອງຄະນະກຳມະການປົກຄອງຂັ້ນແຂວງ; ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານ, ກຳມະການ ຂອງຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ, ນະຄອນຂຶ້ນກັບສູນກາງ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ ຕາມການສະເໜີຂອງ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ນະຄອນຂຶ້ນກັບສູນກາງ;
9. ພິຈາລະນາ, ຮັບຮອງເອົາການສະເໜີຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ, ນະຄອນຂຶ້ນກັບສູນກາງ ກ່ຽວກັບ ການສ້າງຕັ້ງ, ຍຸບເລີກ, ແຍກອອກ, ໂຮມເຂົ້າ ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ;
10. ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານສານປະຊາຊົນ, ຫົວ ໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ, ນະຄອນຂຶ້ນກັບສູນກາງ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;
11. ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ ຫຼື ຍຸບເລີກ ເມືອງ, ນະຄອນ, ຕາແສງ ແລະ ການກຳນົດເຂດແດນຂອງ ເມືອງ, ນະຄອນ, ຕາແສງ ຕາມການສະເໜີຂອງປະທານຄະນະກຳມະການປົກຄອງ ນະຄອນ ຫຼວງ, ແຂວງ, ນະຄອນຂຶ້ນກັບສູນກາງ;
12. ລົບລ້າງ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ຫຼື ນິຕິກຳອື່ນຂອງທຸກຂະແໜງການ ທີ່ຢູ່ໃນຂັ້ນຂອງຕົນ ຫຼື ຂັ້ນລຸ່ມທີ່ຂັດກັບກົດໝາຍ, ຍົກເວັ້ນຄຳຕົກລົງ ກ່ຽວກັບການດຳເນີນຄະດີຂອງ ສານປະຊາ ຊົນ ແລະ ອົງການໄອຍະການປະຊາຊົນ.

**ມາດຕາ 79 (ປັບປຸງ)**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແມ່ນ ອົງການປະຈຳການຂອງສະພາປະຊາຊົນຂັ້ນແຂວງ, ປະຕິບັດ ໜ້າທີ່ແທນສະພາປະຊາຊົນຂັ້ນແຂວງ ໃນເວລາບໍ່ໄດ້ເປີດກອງປະຊຸມ.

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ.

ປະທານ ແລະ ຮອງປະທານສະພາປະຊາຊົນຂັ້ນແຂວງ ເປັນທັງປະທານແລະຮອງປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ມາດຕາ 80 (ປັບປຸງ)**

ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກະກຽມ ແລະ ຮຽກໂຮມກອງປະຊຸມສະພາປະຊາຊົນຂັ້ນແຂວງ;
2. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ ຮອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ນະຄອນຂຶ້ນກັບສູນກາງ;
3. ພິຈາລະນາ, ຮັບຮອງເອົາການສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ພິພາກສາຂອງສານປະຊາຊົນ, ຮອງປະທານສານປະຊາຊົນ ນະຄອນຫຼວງ, ແຂວງ, ນະຄອນຂຶ້ນກັບສູນກາງ ແລະ ປະທານ, ຮອງປະທານ ສານປະຊາຊົນເຂດ;
4. ພິຈາລະນາ, ຮັບຮອງເອົາການສະເໜີແຕ່ງຕັ້ງຄະນະກຳມະການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ, ນະຄອນຂຶ້ນກັບສູນກາງ ແລະ ເຂດ;
5. ຮັບ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 81**

ສະພາປະຊາຊົນຂັ້ນແຂວງ ເປີດກອງປະຊຸມສະໄໝສາມັນປີລະສອງເທື່ອ. ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ອາດຈະຮຽກໂຮມກອງປະຊຸມສະໄໝວິສາມັນກໍໄດ້ຖ້າເຫັນວ່າມີຄວາມຈຳເປັນ.

ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຈະດຳເນີນໄດ້ກໍຕໍ່ເມື່ອມີສະມາຊິກສະພາປະຊາຊົນຂັ້ນແຂວງ ເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງທັງໝົດ.

**ມາດຕາ 82**

ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 83**

ສະພາປະຊາຊົນຂັ້ນແຂວງ ສ້າງຕັ້ງບັນດາຄະນະກຳມະການຂອງຕົນ ເພື່ອເປັນເສນາທິການໃຫ້ແກ່ສະພາປະຊາຊົນຂັ້ນແຂວງ ແລະຄະນະປະຈຳສະພາປະຊາຊົນຂັ້ນແຂວງໃນການຈັດຕັ້ງປະຕິບັດວຽກງານ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 84 (ປັບປຸງ)**

ສະມາຊິກສະພາປະຊາຊົນຂັ້ນແຂວງ ມີສິດຊັກຖາມ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ນະຄອນຂຶ້ນກັບສູນກາງ; ຫົວໜ້າພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ, ປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ; ປະທານສານປະຊາຊົນ, ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ, ນະຄອນຂຶ້ນກັບສູນກາງ, ປະທານອົງການກວດສອບປະຈຳພາກ, ປະທານອົງການກວດກາລັດຂັ້ນແຂວງ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນແຂວງ.

ບຸກຄົນທີ່ຖືກຊັກຖາມ ຕ້ອງຊີ້ແຈງຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ດ້ວຍວາຈາ ຫຼື ເປັນລາຍລັກອັກສອນ.

**ມາດຕາ 85**

ສະມາຊິກສະພາປະຊາຊົນຂັ້ນແຂວງ ຈະບໍ່ຖືກດຳເນີນຄະດີອາຍາ ຫຼື ຈັບຕົວ, ກັກຕົວ ແລະ ກັກຂັງ ຖ້າຫາກບໍ່ໄດ້ຮັບຄວາມເຫັນດີຈາກ ສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນເວລາສະພາປະຊາຊົນຂັ້ນແຂວງ ບໍ່ໄດ້ເປີດກອງປະຊຸມ.

ໃນກໍລະນີ ການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນນັ້ນ ເຈົ້າໜ້າທີ່ທີ່ກ່ຽວຂ້ອງຕ້ອງລາຍງານ ໃນທັນທີໃຫ້ສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະສະພາປະຊາຊົນຂັ້ນແຂວງ ເພື່ອພິຈາລະນາ.

ການສືບສວນ-ສອບສວນ ບໍ່ເປັນສາເຫດພາໃຫ້ ສະມາຊິກສະພາປະຊາຊົນຂັ້ນແຂວງທີ່ຖືກດຳເນີນຄະດີນັ້ນ ຂາດປະຊຸມສະພາປະຊາຊົນຂັ້ນແຂວງ.

### ໝວດທີ IX
### ອົງການປົກຄອງທ້ອງຖິ່ນ

**ມາດຕາ 86 (ປັບປຸງ)**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແບ່ງການປົກຄອງທ້ອງຖິ່ນ ອອກເປັນສາມຂັ້ນ ຄື ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ.

ອ່ານຕໍ່ສະບັບໜ້າ

## ພົບປະ...

(ຕໍ່ຈາກໜ້າ 1)

ພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II ຢູ່ເມືອງປາກທາ.

ທັງນີ້, ກໍເພື່ອໃຫ້ຜູ້ມີສິດເລືອກຕັ້ງ ໄດ້ເຊື່ອມຊຶມ, ຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງຂວາງກ່ຽວກັບຜົນສຳເລັດຂອງສອງກອງປະຊຸມດັ່ງກ່າວ ແລະ ນຳເອົາຄຳຄິດຄຳເຫັນ, ຄຳສະເໜີຂອງຜູ້ມີສິດເລືອກຕັ້ງ ໄປລາຍງານຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອສືບຕໍ່ປັບປຸງແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນ ໂດຍສະເພາະບັນຫາໄພພິບັດທີ່ກຳລັງປະເຊີນຢູ່, ເສັ້ນທາງສັນຈອນພົບຄວາມຫຍຸ້ງຍາກ, ການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ບັນຫາໄພເງິນເຟີ້, ອັດຕາແລກປ່ຽນ, ລາຄາສິນຄ້າ ແລະອື່ນໆ ໃຫ້ໄດ້ຮັບການແກ້ໄຂຢ່າງເປັນຮູບປະທຳ.

ໃນການເຜີຍແຜ່ ໄດ້ຍົກໃຫ້ເຫັນຜົນສຳເລັດ, ຂໍ້ສະດວກລວມເຖິງຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດທຸກຂົງເຂດວຽກງານຂອງລັດຖະບານ ແລະ ແຂວງໃນໄລຍະຜ່ານມາ ພ້ອມທັງທິດທາງແຜນການແກ້ໄຂບັນຫາຕ່າງໆໃນຕໍ່ໜ້າ ໃຫ້ພະນັກງານຫຼັກແຫຼ່ງ ແລະ ພໍ່ແມ່ປະຊາຊົນ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ.



## ສຸກສະບາຍຫາຍໂຣຄາ

# 7 ຄຸນປະໂຫຍດຂອງເຜືອກທີ່ຫຼາຍຄົນຍັງບໍ່ຮູ້

**# ຄັດໂດຍ: ດອກໄມ້ປ່າ**



ເຜືອກ ເປັນພືດຫົວຊະນິດໜຶ່ງທີ່ຢູ່ໃຕ້ດິນ ນິຍົມນຳມາປຸງແຕ່ງເປັນອາຫານຄາວ ແລະ ຫວານ ຫຼື ຈະໜຶ້ງກິນຫຼິ້ນໆກໍໄດ້ບໍ່ວ່າຈະເຮັດເມນູໃດກໍແຊບຖືກໃຈໄປໝົດ ແຕ່ຫຼາຍຄົນອາດຍັງບໍ່ຮູ້ວ່າເຜືອກຍັງມີຄຸນປະໂຫຍດອີກຫຼາກຫຼາຍ ດັ່ງນີ້:

1. ຊ່ວຍບຳລຸງທາດໃນຮ່າງກາຍ

2. ຊ່ວຍບຳລຸງຮ່າງກາຍໃຫ້ແຂງແຮງ

3. ເຜືອກມີທາດເຫຼັກ ແລະ ຟລູອໍໄຣດ໌ (Fluoride) ຈຶ່ງຊ່ວຍເຮັດໃຫ້ກະດູກແຂງແຮງ

4. ເຜືອກເປັນອາຫານທີ່ບຳລຸງລຳໄສ້ແລະແກ້ອາການປວດທ້ອງໄດ້

5. ຊ່ວຍບຳລຸງໝາກໄຂ່ຫຼັງ

6. ຊ່ວຍແກ້ອາການອັກເສບ ລະງັບອາການປວດ

7. ຖ້າຫາກມີອາການປວດເມື່ອຍເສັ້ນເອັນ ປວດກະດູກ ໃຫ້ເອົາຫົວເຜືອກສົດມາບົດໃຫ້ລະອຽດ ປະສົມກັບນ້ຳມັນງາ ຄົນໃຫ້ເຂົ້າກັນ ໃຊ້ເປັນຢາທາບ່ອນທີ່ມີອາການປວດເມື່ອຍ.

---

## ກົມໃຫຍ່...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນເຊົ້າວັນທີ26 ກຸມພານີ້, ກົມສື່ມວນຊົນຮ່ວມກັບຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ໄດ້ຕ້ອນຮັບ ແລະ ນຳພາກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ (ປກສ) ແລະ 3 ອົງການຈັດຕັ້ງມະຫາຊົນ ຈຳນວນທັງໝົດ 30 ສະຫາຍ ເຊິ່ງນຳໂດຍສະຫາຍ ພົຈວ. ໜູໃບ ອິນທິສານ ຮອງຫົວໜ້າກົມໃຫຍ່ການເມືອງປກສຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ; ການມາຢ້ຽມຊົມຄັ້ງນີ້ເປັນການສ້າງຂະບວນການຕ້ອນຮັບວັນສຳຄັນຂອງຊາດ-ຂອງພັກ ປະຈຳປີ 2025 ເຊິ່ງໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ, ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດຊຸດທີ I ເຖິງສະພາແຫ່ງຊາດຊຸດປັດຈຸບັນ (ຊຸດທີ IX) ເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມຮັບຮູ້ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະໜ້າທີ່ຂອງອົງການນິຕິບັນຍັດຫຼາຍຂຶ້ນ.

ໂອກາດດັ່ງກ່າວ, ສະຫາຍ ພົຈວ. ໜູໃບ ອິນທິສານ ໄດ້ສະແດງຄວາມຮູ້ສຶກຕໍ່ການມາຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດໃນຄັ້ງນີ້ວ່າ: ຕາງໜ້າໃຫ້ຄະນະພັກ-ຄະນະນຳກະຊວງ ປກສ ຮູ້ສຶກເປັນກຽດແລະພາກພູມໃຈເປັນຢ່າງຍິ່ງທີ່ໄດ້ມີໂອກາດມາຢ້ຽມຊົມຫ້ອງມູນເຊື້ອສະພາແຫ່ງຊາດ, ຜ່ານການຢ້ຽມຊົມ ແລະ ຮັບຟັງການບັນລະຍາຍມູນເຊື້ອ ກໍຍິ່ງເຮັດໃຫ້ມີຄວາມປີຕິຊົມຊື່ນພາກພູມໃຈຕໍ່ກັບຜົນງານຕ່າງໆໃນການເຄື່ອນໄຫວໃນໄລຍະຜ່ານມາຈົນເຖິງປັດຈຸບັນຂອງອະດີດການນຳ; ສະນັ້ນ, ພວກຂ້າພະເຈົ້າ ຈະຂໍຈົດຈຳເອົາຄຸນງາມຄວາມດີແລະມູນເຊື້ອອັນດີງາມດັ່ງກ່າວຂອງບັນດາອະດີດທ່ານຜູ້ນຳນີ້ມາເປັນແບບຢ່າງໃນການດຳລົງຊີວິດເພື່ອເຝິກຝົນຫຼໍ່ຫຼອມຕົນເອງ, ປະຕິບັດໜ້າທີ່ການເມືອງທີ່ພັກ-ລັດມອບໝາຍ ໃຫ້ມີປະສິດທິພາບສູງ.

**(ອານຸສອນ ພູມມີທອນ)**

(ສພຊ) - ຕອນເຊົ້າວັນທີ27 ກຸມພານີ້, ກົມສື່ມວນຊົນຮ່ວມກັບຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ໄດ້ຕ້ອນຮັບ ແລະ ນຳພາ 3 ອົງການຈັດຕັ້ງມະຫາຊົນຈາກກະຊວງໂຍທາທິການ ແລະ ຂົນສົ່ງ (ຍທຂ) ຈຳນວນ 21 ສະຫາຍ ເຊິ່ງນຳໂດຍສະຫາຍ ນາງ ນຸ້ຍ ສັງວິບຸດ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ, ປະທານສະຫະພັນແມ່ຍິງກະຊວງ ຍທຂ ຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ. ທັງນີ້, ກໍເພື່ອສະເຫຼີມສະຫຼອງວັນສ້າງຕັ້ງສື່ມວນຊົນສະພາແຫ່ງຊາດ ຄົບຮອບ 28 ປີ (12/1996-12/2024) ທັງເປັນການສ້າງຂະບວນການຕ້ອນຮັບວັນສຳຄັນຕ່າງໆຂອງຊາດ-ຂອງພັກ ປະຈຳປີ 2025; ພ້ອມກັນນັ້ນ, ກໍເພື່ອຂໍ່ານັບຊົມເຊີຍຕໍ່ຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມ ສະໄໝທີ XII, ກອງປະຊຸມໃຫຍ່ຜູ້ແທນສະຫະພັນແມ່ຍິງ ສະໄໝທີ VIII ແລະ ເປັນການສ້າງຂະບວນການຕ້ອນຮັບກອງປະຊຸມໃຫຍ່ຜູ້ແທນສະຫະພັນກຳມະບານກະຊວງ ຍທຂ ສະໄໝທີ VIII.

ການມາຢ້ຽມຊົມຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ, ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດຊຸດທີ I ເຖິງສະພາແຫ່ງຊາດຊຸດປັດຈຸບັນ (ຊຸດທີ IX); ພ້ອມນັ້ນ, ຍັງໄດ້ຢ້ຽມຊົມຫ້ອງປະຊຸມໃຫຍ່ຂອງສະພາແຫ່ງຊາດ ເພື່ອເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມຮັບຮູ້ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະໜ້າທີ່ຂອງອົງການນິຕິບັນຍັດຫຼາຍຂຶ້ນ.

**(ນາງ ອາລິນ ສຸພົມມະປະດິດ)**




# ບົດບາດແມ່ຍິງ

**# ດອກຂ່າ ຖິ່ນນາໂນນ**

| | |
|---|---|
| ❊ ແມ່ຍິງນາມຊື່ນີ້<br>ເປັນສະຕີຂັນແຂງ<br>ວຽກໜັກເບົາຫັນຫ້າວ<br>ງານຢູ່ໃສຫາກແລ້ວ | ຄົງຄ່າຄວາມດີ<br>ທຽບທັນບາຫ້າວ<br>ສຸມໃຈກັນໃສ່<br>ສຳເລັດໄດ້ດັ່ງໝາຍ |
| ❊ ບໍ່ວ່າການປູກເຂົ້າ<br>ຕໍ່າສິ້ນໄມອາພອນ<br>ທັງວິຊາການດ້ວຍ<br>ການສອບເສັງເລື່ອນຊັ້ນ | ຖາງໄຮ່ໄຖນາ<br>ເລກເບີຂາຍຄ້າ<br>ການຮຽນຂຽນເກັ່ງ<br>ບໍ່ມີຂ້າງຂອດຄາ |
| ❊ ການທະຫານກໍຍິ່ງກ້າວ<br>ການກິລາທັງຫຼາຍ<br>ຍ້ອນນາງເອົາຕົວຕັ້ງ<br>ເຂັ້ມແຂງຢືນຕໍ່ສູ້ | ທຽມເທົ່າຊຸມຊາຍ<br>ຍາດໄຊຊີງໄດ້<br>ໃຈຈິງຂັນແຂ່ງ<br>ບໍ່ມີຢ້ານຫວັ່ນເກງ ແທ້ໃດ |
| ❊ ປະເພນີມີແຕ່ເຄົ້າ<br>ນຸ່ງຖືຮຽງປະສານ<br>ທັງສິ້ນໄໝຜົມເກົ້າ<br>ເຂົ້າວັດພຽງພໍ່າພ້ອມ | ຄຽງຄູ່ນວນນາງ<br>ຕໍ່ເຕີມເອົາໄວ້<br>ຜືນແຜພາດບ່ຽງ<br>ຕອມຕຸ້ມບໍ່ໄລ ງາມເດ |
| ❊ ຄັນເລື່ອງໃນບ່ອນຢັ້ງ<br>ກໍຫາກໄວວາທຳ<br>ປຸງແຕ່ງແກງກ້ອຍ<br>ເປັນໜຶ່ງແຮງຊ່ວຍຊວ້ານ | ເຮືອນຢູ່ອາໄສ<br>ຄໍ່າແລງຍັງເຊົ້າ<br>ຍໍມາຕົບແຕ່ງ<br>ຄອບຄົວໃຫ້ຢູ່ເຢັນ ນັ້ນນາ |
| ❊ ຄັນວ່າຂຽນຂີດຂໍ້<br>ບໍ່ອາດບັນຍາຍໝົດ<br>ຍັງມີຫຼາຍກະດໍ້<br>ແປດເດືອນສາມເພິ່ນກ່າວເນັ້ນ | ຍໍຍົກສັກສີ<br>ຄ່າຄຸນຈາຈໍ້<br>ການກະທຳກໍເດັ່ນ ເບິ່ງແມ<br>ຍໍຍ້ອງໝູ່ຍິງ ຊອບແລ້ວ! |



## ຫົກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

❊ **ຊົມ**ເຊີຍວັນ**ແມ່ຍິງສາກົນ**ຄົບຮອບ **115 ປີ** ຫຼາຍສະຖານທີ່ໄດ້ຈັດງານ**ສະເຫຼີມສະຫຼອງຢ່າງຄຶກຄື້ນ** ແລະ ຊົມກຽດສັກສີຂອງສະຕີທົ່ວໂລກ ອັນວ່າຄວາມໂສກເສົ້າ ຈົ່ງເຫີນຫ່າງຫາຍໜີ ຂໍໃຫ້ມີຄວາມສຸກ ມ່ວນໃນມະໂນແມ້ງ ຂໍໃຫ້ແຂງແຮງພ້ອມ ເງິນທອງໄຫຼຫຼັ່ງ **ມາເນີ!** ຜິວພັນສຸດຜ່ອງກ້ຽງ ໃສເຫຼື້ອມດັ່ງມະນີ **ທ່ານເອີຍ!**

❊ **ທີ 22** ມີນາ ຫຍັບຈໍ່ຈອບເຖິງ **70 ປີ**ວຽນມາ ລະນຶກຫາບຸນຄຸນຮູ້ **ພັກຜູ້ນຳພາສ້າງ** ເຍືອງທາງໃຫ້ເດີນໄຕ່ ສົດໃສພຸ່ງພົ້ນ ເລີງເລື້ອຍຕະຫຼອດມາ **ໂອກາດນີ້!** ຂໍໃຫ້ພັກຜູ້ກ້າ ປະຊາພ່ໍາດຽວກັບ ສຸກກະເສມສໍາລານ ທົ່ວທານີ ແຄ້ວນ ທຸກແຫ່ງແດນທໍ່າທ້ອງ ເມືອງລາວເຊັ່ງຊ່າ ມີອາຍຸ-ວັນນະ-ສຸຂະພາບພຽບພ້ອມ ຢືນຄຽງຂ້າງຄູ່ປະຊາ**ທ່ານເອີຍ!**

## ຊອບຍິ້ມ

*# ແອ່ບຕຸ້ງ*

### ເລື່ອງ: ບົດຮຽນກະດີ

ອໍານວຍການໂຮງໝໍໄດ້ໄປກອດຮຽນ ແລະ ເຂົ້າຮ່ວມກອງປະຊຸມຢູ່ຂະແໜງຈິດຕະເວດ; ໃນລະຫວ່າງຍ່າງໄປຫ້ອງປະຊຸມ ໄດ້ຂໍແວ່ເຂົ້າຫ້ອງນ້ຳຊາຍເພື່ອຖ່າຍເບົາ, ລະຫວ່າງເບົາຢູ່ນັ້ນ ມີຄົນເຈັບທີ່ຢືນຢ່ຽວຢູ່ຂ້າງໆ ຖາມວ່າ:

"ເຈົ້າແມ່ນໃຜ ມາເຮັດຫຍັງຢູ່ນີ້"

ທ່ານອໍານວຍການຕອບວ່າ: "ໂອ໋ ຂ້ອຍເປັນອໍານວຍການໂຮງໝໍ, ມາເຮັດຮຽນຮ່ວມກັບກະເຈົ້າຢູ່ນີ້"

ຄົນເຈັບງຶກຫົວ ສະແດງຄວາມເຂົ້າໃຈ ແລະ ເອົ້າກັບທ່ານອໍານວຍການວ່າ: "ໂອ໋ທວາ, ບໍ່ເປັນຫຍັງດອກ ໝູ່ຢູ່ນີ້ມີແຕ່ຄົນເກົ່າໆ ອີກບໍ່ດົນກະເຊົາ, ຕອນຂ້ອຍມາໃໝ່ໆ ຂ້ອຍຍັງຄິດວ່າຂ້ອຍເປັນລັດຖະມົນຕີ"

??????



## ຄະຕິເຕືອນໃຈ

*#ດອກຫຍ້າ*

ຢ່າໃສດາຄົ້ນ
ໃຫ້ຄິດຕໍ່ເຂົາໄລ່ໂຄ້ງ

ບ່າງາຂ້າງເພີ່ນ
ຄວາຍເຖົ້າແທ່ງຕົນ

ລັດຖະສະພາຕ່າງປະເທດ

# ນູແວນເຊລັງ ຈະສະເໜີຮ່າງກົດໝາຍ ໃຫ້ລັດຖະສະພາ ມີວາລະ 4 ປີ

(Xinhua) - ລັດຖະບານນູແວນເຊລັງ ໄດ້ເຫັນດີນຳສະເໜີຮ່າງກົດໝາຍທີ່ຈະໃຫ້ລັດຖະສະພາມີອາຍຸການ 4 ປີ ຂຶ້ນຢູ່ກັບການລົງປະຊາມະຕິ ເຊິ່ງໝາຍຄວາມວ່າອາຍຸການຂອງລັດຖະສະພາຕາມມາດຕະຖານ ຈະຍັງຄົງຢູ່ທີ່ 3 ປີ, ແຕ່ສາມາດຂະຫຍາຍວາລະສູງສຸດເປັນ 4 ປີໄດ້.

ລັດຖະມົນຕີກະຊວງຍຸຕິທຳ ພອນ ໂກນສະມິດ (Paul Goldsmith) ກ່າວໃນວັນພະຫັດທີ 27 ກຸມພາຜ່ານມາວ່າ "ເມື່ອພິຈາລະນາເຖິງຄວາມສຳຄັນທາງລັດຖະທຳມະນູນຂອງອາຍຸການລັດຖະສະພາ, ການປ່ຽນແປງນີ້ ຈະຂຶ້ນກັບຜົນໄດ້ຮັບຂອງການລົງປະຊາມະຕິທີ່ມີຜົນຜູກມັດ; ມັນເປັນໄປໄດ້ທີ່ການລົງປະຊາມະຕິ ອາດຈະຈັດຂຶ້ນຄຽງຄູ່ກັບການເລືອກຕັ້ງທົ່ວໄປຄັ້ງຕໍ່ໄປ ໃນປີ 2026."

ລັດຖະສະພານູແວນເຊລັງ ພະຍາຍາມຂະຫຍາຍວາລະການດຳລົງຕຳແໜ່ງ ຈາກ 3 ເປັນ 4 ປີແຕ່ບໍ່ປະສົບຜົນສຳເລັດເຖິງສອງຄັ້ງ, ເຊິ່ງຜົນການລົງປະຊາມະຕິທັງໃນປີ 1967 ແລະ 1990 ລົ້ມເຫຼວ ໂດຍມີຜູ້ລົງຄະແນນສຽງໜ້ອຍກວ່າໜຶ່ງສ່ວນສາມ ທີ່ສະໜັບສະໜູນການຂະຫຍາຍວາລະ.



# ຜົນການເລືອກຕັ້ງເບື້ອງຕົ້ນ ພັກລັດຖະບານຂອງ Chad ຊະນະຢ່າງຖ້ວມລົ້ນໃນການເລືອກຕັ້ງສະພາສູງຄັ້ງທຳອິດ



(Xinhua)-ພັກລັດຖະບານຂອງສາທາລະນະລັດຊາດ, ຂະບວນການກອບກູ້ຊາດ (Patriotic Salvation Movement) ໄດ້ຮັບໄຊຊະນະຢ່າງຖ້ວມລົ້ນ ໃນການເລືອກຕັ້ງສະພາສູງຄັ້ງທຳອິດຂອງປະເທດ ໂດຍໄດ້ 45 ຈາກທັງໝົດ 46 ທີ່ນັ່ງ, ອີງຕາມຜົນເບື້ອງຕົ້ນທີ່ເປີດເຜີຍເມື່ອວັນອັງຄານທີ 25 ກຸມພາຜ່ານມາໂດຍສຳນັກງານບໍລິຫານຈັດການການເລືອກຕັ້ງແຫ່ງຊາດ ເຊິ່ງເປັນອົງການການເລືອກຕັ້ງຂອງປະເທດ.

ຜົນການເລືອກຕັ້ງສະແດງໃຫ້ເຫັນວ່າ ມີແມ່ຍິງ 18 ຄົນ ໄດ້ຮັບເລືອກຕັ້ງ.

ການລົງຄະແນນສຽງໄດ້ເປີດຂຶ້ນໃນຕອນເຊົ້າວັນອັງຄານ ໂດຍມີຜູ້ສະໝັກຮັບເລືອກຕັ້ງທັງໝົດ 124 ທ່ານ ຈາກ 16 ພັກການເມືອງ ເຂົ້າຮ່ວມໃນການເລືອກຕັ້ງ.

ຜົນການເລືອກຕັ້ງຂັ້ນສຸດທ້າຍ ຈະຖືກປະກາດໂດຍສະພາລັດຖະທຳມະນູນ.

ສະພາສູງຂອງຊາດ ມີສະມາຊິກ 69 ຄົນ, ການເລືອກຕັ້ງຈັດຂຶ້ນເພື່ອຍາດຊີງ 46 ທີ່ນັ່ງ, ໃນຂະນະທີ່ສະມາຊິກສະພາສູງ 23 ຄົນ ຈະຖືກແຕ່ງຕັ້ງໂດຍປະທານາທິບໍດີ; ສະມາຊິກສະພາສູງໄດ້ຮັບເລືອກໃຫ້ດຳລົງຕຳແໜ່ງເປັນເວລາ 6 ປີ.

# ປະທານລັດຖະສະພາອີຣານ ໃຫ້ຄຳໝັ້ນ ສະໜັບສະໜູນຄວາມພະຍາຍາມສ້າງສາລີບັງ



(Xinhua) - ທ່ານ ໂມຮຳມັດ ບາເກີ ກາລີບາຟ (Mohammad Bagher Ghalibaf) ປະທານສະພາທີ່ປຶກສາອິດສະລາມ (Islamic Consultative Assembly) ຫຼື ລັດຖະສະພາຂອງອີຣານ ກ່າວເມື່ອວັນອາທິດທີ 23 ກຸມພາຜ່ານມາ ໃນລະຫວ່າງການພົບປະກັບປະທານາທິບໍດີ ແຫ່ງ ສາທາລະນະລັດລີບັງ ທ່ານ ໂຈເຊຟ ອູນ (Joseph Aoun) ວ່າ: ອີຣານ ພ້ອມແລ້ວທີ່ຈະຮ່ວມມືກັບບັນດາປະເທດອາຫຼັບ ແລະ ອິດສະລາມ ເພື່ອສ້າງສາລີບັງຄືນໃໝ່ ທີ່ຖືກທຳລາຍຈາກປະຕິບັດການທາງທະຫານຂອງອິດສະຣາແອນ.

ທ່ານ ກາລີບາຟ ໄດ້ນຳພາຄະນະຜູ້ແທນທີ່ລວມມີລັດຖະມົນຕີກະຊວງການຕ່າງປະເທດອີຣານ ທ່ານ ເຊເອັດ ອັບບາສ ອາຣາຄະຊີ (Seyed Abbas Araghchi), ຢ້ຳຄືນການສະໜັບສະໜູນຂອງເຕເຮຣານຕໍ່ອຳນາດອະທິປະໄຕ ແລະ ສະຖຽນລະພາບຂອງລີບັງ ໃນລະຫວ່າງການເຈລະຈາທີ່ເບຣຸດ, ຕາມຖະແຫຼງການຂອງປະທານາທິບໍດີລີບັງ.

ທ່ານກ່າວຢ້ຳຄືນທ່າທີຂອງອີຣານຕໍ່ການແຊກແຊງຈາກພາຍນອກໃນກິດຈະການຂອງລີບັງ ແລະ ສະແດງຄວາມຫວັງຕໍ່ການຂະຫຍາຍການຮ່ວມມືສອງຝ່າຍ.

ປະທານລັດຖະສະພາອີຣານ ຍັງໄດ້ສົ່ງຄຳອວຍພອນຈາກປະທານາທິບໍດີອີຣານທ່ານ ມາຊູດ ເປເຊຊຄຽນ (Masoud Pezeshkian) ແລະ ໄດ້ເຊື້ອເຊີນທ່ານ ອູນ ໄປຢ້ຽມຢາມເຕເຮຣານ ໂດຍເນັ້ນໜັກເຖິງຄວາມສຳຄັນຂອງການເພີ່ມທະວີການພົວພັນລະຫວ່າງຂະແໜງເສດຖະກິດ, ການເມືອງ ແລະ ວັດທະນະທຳ.

ຕາມການລາຍງານຈາກສຳນັກຂ່າວ IRNA ຂອງທາງການອີຣານ, ທ່ານ ກາລີບາຟ ກ່າວໃນລະຫວ່າງການຢ້ຽມຢາມລີບັງ ວ່າ: ອີຣານ ຈະສະໜັບສະໜູນທຸກຄວາມເຫັນດີເຫັນພ້ອມທີ່ບັນລຸໄດ້ຮ່ວມກັນໂດຍລັດຖະບານ, ລັດຖະສະພາ, ກຸ່ມຮິຊບອລເລາະ (Hezbollah) ແລະ ປະຊາຊົນລີບັງ.

IRNA ລາຍງານວ່າ ຄະນະຜູ້ແທນອີຣານ ໄດ້ໄປຢ້ຽມຢາມເບຣຸດ ເພື່ອເຂົ້າຮ່ວມພິທີສົບຂອງອະດີດຜູ້ນຳກຸ່ມຮິຊບອລເລາະທ່ານຮັສຊັນນາສຣັລເລາະ (Hassan Nasrallah) ແລະ ທ່ານ ຮາເຊມ ຊາຟິດດີນ (Hashem Safieddine) ເຊິ່ງທັງສອງເສຍຊີວິດຈາກການໂຈມຕີຂອງອິດສະຣາແອນ ເມື່ອປີຜ່ານມາ.

ທ່ານອູນກ່າວຕ້ອນຮັບຄະນະຜູ້ແທນ ໂດຍຮັບຮູ້ບັນດາສິ່ງທ້າທາຍອັນແກ່ຍາວຂອງລີບັງ ທີ່ເກີດຈາກການປະທະກັນໃນພາກພື້ນ; ທ່ານໄດ້ຢ້ຳຄືນທ່າທີຂອງຕົນກ່ຽວກັບການບໍ່ແຊກແຊງເຂົ້າກິດຈະການອະທິປະໄຕ ແລະ ເນັ້ນໜັກວ່າ, ຄວາມສາມັກຄີແຫ່ງຊາດ ແມ່ນການຕອບໂຕ້ທີ່ດີທີ່ສຸດຕໍ່ທຸກການຮຸກຮານ.

ປະທານາທິບໍດີລີບັງ ໄດ້ຍ້ອງຍໍການມີສ່ວນຮ່ວມຂອງອີຣານໃນກອງປະຊຸມສຸດຍອດຣີຢາດ (Riyadh summit) ເມື່ອບໍ່ດົນມານີ້, ໂດຍສະເພາະການຮັບຮອງແນວທາງສອງລັດໃນການແກ້ໄຂບັນຫາຂໍ້ຂັດແຍ້ງລະຫວ່າງອິດສະຣາແອນ-ປາແລັດສະຕິນ ແລະ ການຮັບຮູ້ອຳນາດການປົກຄອງປາແລັດສະຕິນໃນຖານະເປັນຕົວແທນທີ່ຖືກຕ້ອງຕາມກົດໝາຍຂອງຊາວປາແລັດສະຕິນ; ທ່ານ ອູນ ຢືນຢັນອີກຄັ້ງໃນການສະໜັບສະໜູນຢ່າງໝັ້ນຄົງຂອງລີບັງ ຕໍ່ປະເດັນປາແລັດສະຕິນ ແລະ ຮຽກຮ້ອງໃຫ້ມີການແກ້ໄຂບັນຫາທີ່ຍຸຕິທຳ.

ທ່ານອູນຍັງໄດ້ສະແດງເຈດຈຳນົງຂອງລີບັງ ທີ່ຈະພັດທະນາການພົວພັນທີ່ເຂັ້ມແຂງ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດກັບອີຣານ.

# ລັດຖະບານດານມາກສະເໜີກົດໝາຍຫ້າມໃຊ້ "ສະມາດໂຟນ ແລະ ແທັບເລັດ" ໃນໂຮງຮຽນ



(AFP) - ກະຊວງສຶກສາທິການຂອງດານມາກ ກຽມສະເໜີຮ່າງກົດໝາຍໃໝ່ "ຫ້າມໃຊ້ໂທລະສັບມືຖືໃນໂຮງຮຽນ"; ວັນອັງຄານທີ 25 ກຸມພາຜ່ານມາ, ທ່ານ ແມັດທຽສ ເທສເຟ (Mattias Tesfaye) ລັດຖະມົນຕີກະຊວງສຶກສາທິການ ກ່າວວ່າ: ເຖິງແມ່ນວ່າລາຍລະອຽດຂອງກົດໝາຍຍັງບໍ່ມີການຕົກລົງຢ່າງເປັນທາງການ, ແຕ່ກົດໝາຍຈະບໍ່ອະນຸຍາດໃຫ້ນັກຮຽນໃຊ້ໂທລະສັບມືຖືແລະແທັບເລັດສ່ວນຕົວ ພາຍໃນໂຮງຮຽນ ບໍ່ວ່າຈະເປັນໄລຍະພັກ ຫຼື ລະຫວ່າງຮຽນ.

ແຜນການດັ່ງກ່າວປະຕິບັດຕາມຄຳແນະນຳຈາກຄະນະກຳມະການສະຫວັດດີການໄວໜຸ່ມ, ເຊິ່ງຍັງໄດ້ແນະນຳໃຫ້ຈຳກັດການໃຊ້ໂທລະສັບອັດສະລິຍະ ສະເພາະຜູ້ທີ່ມີອາຍຸ 13 ປີຂຶ້ນໄປເທົ່ານັ້ນ.

# ຫວຽດນາມ ອະນຸມັດໂຄງການກໍ່ສ້າງ ພື້ນຖານໂຄງລ່າງສຳຄັນ, ປັບຄາດໝາຍ GDP




(Reuters) - ວັນພຸດທີ 19 ກຸມພາຜ່ານມາ, ສະພາແຫ່ງຊາດຫວຽດນາມ ໄດ້ອະນຸມັດການຍົກລະດັບຄາດໝາຍການເຕີບໂຕທາງເສດຖະກິດໃນປີນີ້ ແລະສະໜັບສະໜູນບັນດາໂຄງການພື້ນຖານໂຄງລ່າງທີ່ສຳຄັນ, ລວມທັງເສັ້ນທາງລົດໄຟທີ່ເຊື່ອມຕໍ່ກັບຈີນ ແລະ ໂຄງການກໍ່ສ້າງໂຮງໄຟຟ້ານິວເຄຼຍ (ພະລັງງານປະລະມານູ) ແຫ່ງທຳອິດຂອງປະເທດ.

ໃນກອງປະຊຸມສະໄໝວິສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ XV ຍັງໄດ້ຮັບຮອງເອົາກົດລະບຽບທີ່ຈະອະນຸຍາດໃຫ້ Starlink ຂອງ ອີລອນ ມັສກ໌ (Elon Musk) ໃຫ້ບໍລິການອິນເຕີເນັດຜ່ານດາວທຽມໃນຫວຽດນາມ, ຂະນະທີ່ຍັງເປັນເຈົ້າຂອງບໍລິສັດລູກໃນທ້ອງຖິ່ນທັງໝົດ.

ບົດລາຍງານຂອງສະພາແຫ່ງຊາດກ່າວວ່າ "ການທົດລອງໃຫ້ບໍລິການອິນເຕີເນັດ broadband ໂດຍໃຊ້ວົງໂຄຈອນຕ່ຳຂອງໂລກ (low Earth orbit) ຢູ່ຫວຽດນາມນັ້ນ ແມ່ນອີງໃສ່ຫຼັກການຮັບປະກັນການປ້ອງກັນປະເທດ ແລະ ຄວາມໝັ້ນຄົງຂອງຊາດ".

ສະມາຊິກສະພາແຫ່ງຊາດ ໄດ້ອະນຸມັດຄາດໝາຍທີ່ລັດຖະບານສະເໜີ ໃຫ້ເສດຖະກິດເຕີບໂຕຢ່າງໜ້ອຍ 8% ໃນປີ 2025, ເພີ່ມຂຶ້ນຈາກເປົ້າໝາຍກ່ອນໜ້າ ຢູ່ທີ່6.5-7.0%.

ລັດຖະບານກ່າວໃນບົດລາຍງານຕໍ່ສະພາແຫ່ງຊາດວ່າ "ເຖິງແມ່ນວ່າເສດຖະກິດຈະເຕີບໂຕໄວຂຶ້ນ, ແຕ່ສະຖຽນລະພາບທາງເສດຖະກິດມະຫາພາກ ຍັງຕ້ອງໄດ້ຮັບການຮັບປະກັນ; ຂະນະທີ່ໄພເງິນເຟີ້ຕ້ອງຢູ່ພາຍໃຕ້ການຄວບຄຸມ, ເປົ້າໝາຍອັດຕາເງິນເຟີ້ແມ່ນຢູ່ລະຫວ່າງ 4.5-5.0% ໃນປີນີ້.

ສະພາແຫ່ງຊາດ ຍັງໄດ້ຮັບຮອງເອົາມະຕິກ່ຽວກັບການກໍ່ສ້າງທາງລົດໄຟສາຍໃໝ່ທີ່ເຊື່ອມຕໍ່ທ່າເຮືອສຳຄັນຢູ່ພາກເໜືອຫວຽດນາມກັບຈີນ, ຄາດວ່າໂຄງການນີ້ຈະມີມູນຄ່າ 8.3 ຕື້ໂດລາສະຫະລັດ ເຊິ່ງສ່ວນໜຶ່ງຈະໄດ້ຮັບທຶນກູ້ຢືມຈາກລັດຖະບານຈີນ.

ສະມາຊິກສະພາແຫ່ງຊາດ ຍັງໄດ້ຮັບຮອງເອົານະໂຍບາຍເພື່ອພັດທະນາໂຮງໄຟຟ້ານິວເຄຼຍຢູ່ຫວຽດນາມ, ເຊິ່ງໂຮງງານແຫ່ງທຳອິດນີ້ ຄາດວ່າຈະສຳເລັດໃນປີ 2031; ພາຍໃຕ້ນະໂຍບາຍດັ່ງກ່າວ ລັດຖະບານສາມາດແຕ່ງຕັ້ງຜູ້ຮັບເໝົາກໍ່ສ້າງໂຮງໄຟຟ້າໂດຍບໍ່ຕ້ອງມີຂະບວນການປະມູນ. ນອກຈາກນີ້, ຍັງໄດ້ຕົກລົງກ່ຽວກັບແຜນການທີ່ຈະໃຫ້ການສະໜັບສະໜູນທາງດ້ານການເງິນແກ່ບໍລິສັດທ້ອງຖິ່ນທີ່ເຂົ້າສູ່ພາກອຸດສາຫະກຳເຊມິຄອນດັກເຕີ (semiconductor).

ໃນວັນອັງຄານທີ 18 ກຸມພາ, ສະພາແຫ່ງຊາດ ໄດ້ອະນຸມັດແຜນການປະຕິຮູບລະບົບລັດຖະການຄັ້ງໃຫຍ່ ທີ່ຫຼຸດກະຊວງ ແລະ ອົງການຂອງລັດຖະບານລົງເຖິງໜຶ່ງສ່ວນຫ້າ ເນື່ອງຈາກພັກກຳອຳນາດພະຍາຍາມທີ່ຈະຫຼຸດຄ່າໃຊ້ຈ່າຍ ແລະ ປັບປຸງປະສິດທິພາບດ້ານບໍລິຫານ.




# ສະໝອງໄຫຼ

**# ດົ້ນກົບເມກ**

ຜູ້ຂຽນໄດ້ຍິນຄຳວ່າ: ສະໝອງໄຫຼ ມາດົນນານ ທີ່ພະນັກງານບຳນານເລົ່າສູ່ຟັງ ແລະ ເປັນຜູ້ເຖົ້າຜູ້ແກ່ເວົ້າເຖິງບຸກຄົນຜູ້ມີສະຕິປັນຍາ ແຕ່ບໍ່ໄດ້ຖືກຄຸ້ມຄອງນຳໃຊ້ພວກເຂົາ ຍ້ອນວ່າບໍ່ຮູ້ວິທີບໍລິຫານຊັບພະຍາກອນມະນຸດທີ່ມີຄຸນນະພາບ ແລະ ອີກສາເຫດໜຶ່ງ ກໍອາດເກີດມາຈາກແນວຄິດນິດໄສບາງຄົນຄັບແຄບ, ບໍ່ຢາກນຳໃຊ້ຜູ້ມີສະຕິປັນຍາ ແລະ ຢ້ານເຂົາດີເດັ່ນກວ່າ ເຊິ່ງຂໍ້ນີ້ອາດເປັນສາເຫດສຳຄັນກວ່າໝູ່ເທົ່າທີ່ສັງເກດເຫັນ; ດັ່ງນັ້ນ, ເລີຍນຳໃຊ້ຜູ້ທີ່ເຊື່ອຟັງ, ບໍ່ຕ້ອງຖົກຖຽງ ປະຕິບັດຕາມຢ່າງດຽວ.

ເລື່ອງຂອງສະໝອງໄຫຼກໍຕ້ອງໄດ້ຈຳແນກໃຫ້ເຂົ້າໃຈລະດັບສະຕິປັນຍາຂອງຄົນທີ່ບໍ່ເທົ່າກັນ ເຖິງແມ່ນວ່າບາງຄົນຮຽນຈົບສູງຊັ້ນດຽວກັນ ແຕ່ວິທີຄິດ-ການຄົ້ນຄວ້າ, ສັກກະຍະພາບການຄິດແລະສະຕິປັນຍາ ຈຶ່ງເກີດຂຶ້ນຕ່າງກັນໃນສັງຄົມບ້ານເຮົາ ຈຶ່ງມີສຽງຊຸບຊິບວ່າ: ສະໝອງແບບໃດເອີ້ນວ່າຫົວກະທິ ແລະ ສະໝອງແບບໃດເອີ້ນວ່າຫາງກະທິ ຫຼື ກະທິບູດນຳໃຊ້ບໍ່ເກີດຜົນ.

ຜູ້ຂຽນສັງເກດມາດຕະຖານສາກົນນິຍົມທີ່ຈະເລີນ ເຂົາມັກຈະນຳໃຊ້ຄົນທີ່ມີສະຕິປັນຍາລະດັບຫົວກະທິ ເຂົ້າໃນວຽກທີ່ເຂົາຖະໜັດ, ຄຸ້ມຄອງ-ເຊີດຊູຕາມພາລະບົດບາດ ຍົກຕົວຢ່າງໃນເລື່ອງສາມກົກຂອງຈີນ, ໂຈໂສ ຢາກໄດ້ ກວນອູມາໃຊ້, ພະຍາຍາມເອົາໃຈໃຫ້ລາງວັນ ແຕ່ໄຮ້ຜົນ ເພາະຈິດໃຈ ກວນອູ ເລືອກຄົນມີຄຸນນະທຳຢ່າງເລົ່າປີ່ ແລ້ວ.

ປະຫວັດສາດລາວຜ່ານຫຼາຍຍຸກ ກໍໄດ້ນຳໃຊ້ຄົນເກັ່ງຫຼາຍດ້ານໃນການປົກປັກຮັກສາເອກະລາດແຫ່ງຊາດ ກໍຄືການສ້າງສາພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງ; ສະນັ້ນ, ການສັນຫາຄົນເກັ່ງ ຫຼື ເຊີດຊູຍົກຍ້ອງ, ນຳໃຊ້ຊັບພະຍາກອນມະນຸດທີ່ມີຄຸນນະພາບລະດັບຫົວກະທິ ກໍແມ່ນສິ່ງໜຶ່ງທ້າທາຍຄວາມສາມາດຂອງຫຼາຍໜ່ວຍງານ ວ່າຈະລະດົມດຶງດູດເອົາຊັບພະຍາກອນມະນຸດຫົວກະທິໄວ້ໃຊ້ເຂົ້າໃນການພັດທະນາ. ຜູ້ຂຽນຈຶ່ງຂໍສັງລວມສັ້ນໆວ່າ: ການບໍ່ນຳໃຊ້ຄົນເກັ່ງ ຫຼື ປະປ່ອຍໃຫ້ສະໝອງໄຫຼ ມັນກໍແມ່ນຈຸດໜຶ່ງທີ່ພາໃຫ້ພັດທະນາຊ້າໄດ້ຄືກັນບໍ ! ສະເໜີແລກປ່ຽນ.






# ວິທີເຮັດວຽກ

**ພາກທີ 7**
**ບັນຫາພະນັກງານ**

ຄ) ຄັດເລືອກເອົາພວກຄົນທີ່ສາມາດກຳກັບການແກ້ໄຂບັນຫາຕ່າງໆໄດ້ໃນເວລາເກີດມີສະພາບຫຍຸ້ງຍາກສັບສົນ.

ຜູ້ໃດຫາກຢ້ານການຮັບຜິດຊອບແລະບໍ່ມີຫົວຄິດປະດິດນັ້ນບໍ່ແມ່ນຄົນທີ່ຈະເປັນຜູ້ນຳ. ຄົນຜູ້ຈະເປັນຜູ້ນຳຖືກຕ້ອງນັ້ນ ຕ້ອງເປັນດັ່ງລຸ່ມນີ້ຄື: ເວລາປະລາໄຊກໍບໍ່ກະວົນກະວາຍ, ເວລາມີໄຊກໍບໍ່ອວດອົ່ງທະນົງຕົວ ເວລາປະຕິບັດມະຕິຕົກລົງກໍເດັດດ່ຽວ ກ້າຫານ ແລະ ບໍ່ຢ້ານຄວາມຍາກລຳບາກ.

ງ) ຄັດເລືອກເອົາພວກຄົນທີ່ຮັກສາລະບຽບວິໄນຢ່າງຖືກຕ້ອງເລື້ອຍໆ, ນັ້ນແມ່ນຂອບເຂດແຫ່ງການຄັດເລືອກເອົາພະນັກງານ. ພວກເຮົາຕ້ອງປະຕິບັດໃຫ້ຖືກຕ້ອງຕາມນັ້ນສະເໝີ.

ໃນພັກຂອງພວກເຮົາ ມີບາງບ່ອນກໍມີຄົນທີ່ມັກໃຊ້ໄວຍາກອນ ແລະ ຄວາມເວົ້າອັນມ່ວນໆ ແຕ່ຫາກບໍ່ເຮັດວຽກການຕົວຈິງໄດ້ ແລະ ບໍ່ໄປຮ່ວມເຮັດການຕໍ່ສູ້ໄດ້. ພວກສະມາຊິກທີ່ຂຽນບໍ່ດີ ເວົ້າບໍ່ມ່ວນ ແຕ່ຫາກຊື່ສັດ, ຫ້າວຫັນ ແລະ ໃກ້ຊິດປະຊາຊົນ ຊ້ຳພັດຖືກຢ່ຳໃຫ້ຈົມລົງ. ພວກເຮົາຕ້ອງແກ້ໄຂເລື່ອງນີ້ໃຫ້ຈົນໄດ້.

ເມື່ອຄັດເລືອກເອົາພະນັກງານຢ່າງຖືກຕ້ອງແລ້ວ ກໍຍັງຕ້ອງສອນທິດສະດີໃຫ້ເຂົາເຈົ້າອີກດ້ວຍ, ມີແຕ່ໃຫ້ເຮັດວຽກໂດຍບໍ່ມີທິດສະດີນັ້ນ, ກໍຄືດຽວກັນກັບເຮັດໃຫ້ເຂົາເຈົ້າມີຕາໜຶ່ງແຈ້ງຕາໜຶ່ງບອດ.

ອ່ານຕໍ່ສະບັບໜ້າ...



## ອັດຕະປື...

(ຕໍ່ຈາກໜ້າ 4)

ດ້ວຍການກວດສອບອິດສະຫຼະ, 8) ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍການລົງທຶນຂອງລັດສະບັບເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015 ມາດຕາ 18 ໂຄງການລົງທຶນຂອງລັດປົກກະຕິ. ພ້ອມກັນນີ້, ຍັງໄດ້ເຜີຍແຜ່ເນື້ອໃນມະຕິກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງອັດຕະປື ອີກດ້ວຍ.

ຕອນທ້າຍ, ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມ ໄດ້ສົນທະນາ, ແລກປ່ຽນຄຳຄິດຄຳເຫັນແລະສະເໜີກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະການແກ້ໄຂປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມ ໃຫ້ມີຄວາມຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍ ແລະ ສະພາບຄວາມເປັນຈິງ.

**(ວິນັດ ສີສຸລາດ)**

ເຫັນໄວ້ ໄດ້ຍິນມາ

# ໃຜຄົດໂກງ ຈະຖືກລົງໂທດຢ່າງເດັດຂາດ

❖ ວິເສດ ສະແຫວງສຶກສາ

ສປ ຈີນ ເປັນປະເທດຕົວແບບໜຶ່ງໃນການປະຕິບັດກົດໝາຍ ໂດຍສະເພາະແມ່ນມາດຕະການຕໍ່ຜູ້ກະທຳຄວາມຜິດ ດັ່ງຕົວຢ່າງຈາກໜັງສືພິມ ຈາຍນາເດລີ (ພາສາອັງກິດ) ປະຈຳວັນທີ 10-16 ຕຸລາ 2014 ທີ່ບອກວ່າ ສານປະຊາຊົນສູງສຸດຈີນ ໄດ້ອອກຄຳສັ່ງໃຫ້ຫ້ອງການຄວບຄຸມດ້ານວິໄນພະນັກງານລັດໃນລະດັບທ້ອງຖິ່ນທົ່ວປະເທດ ເອົາໃຈໃສ່ຕິດຕາມບໍ່ໃຫ້ພະນັກງານຂະແໜງຍຸຕິທຳ-ສານ ຮັບຄ່າຈ້າງ ຫຼື ລາງວັນ ຄ່າບໍລິການຈາກປະຊາຊົນຍ້ອນໄດ້ຊ່ວຍແລ່ນເອກະສານຕ່າງໆ. ຄຳສັ່ງໄດ້ບົ່ງແຈ້ງວ່າຫ້ອງການຄວບຄຸມວິໄນພະນັກງານ ຕ້ອງຕິດຕາມກວດກາຢ່າງເຄັ່ງຄັດ ແລະ ຕໍ່ເນື່ອງ ເພື່ອປ້ອງກັນບໍ່ໃຫ້ບັນດາພະນັກງານສານ-ຍຸຕິທຳສວຍໂອກາດແລ່ນເອກະສານຄະດີຕ່າງໆໃຫ້ປະຊາຊົນໂດຍຫວັງຜົນຕອບແທນ "ຄ່າເມື່ອຍ" ພວກສວຍໂອກາດດັ່ງກ່າວ ມັກຈະເປັນພະນັກງານສານ, ພະນັກງານກົດໝາຍ ກໍຄືຈາກພາກສ່ວນຍຸຕິທຳ ທີ່ເຮັດໜ້າທີ່ເປັນນາຍໜ້າ ຫຼື ຄົນກາງ; ພວກນີ້ອາໄສຫາກິນນຳຄະດີຮ້ອງຟ້ອງຕ່າງໆ ໂດຍຮຽກຄ່າຕອບແທນເປັນເງິນ ຍ້ອນໄດ້ຊ່ວຍແລ່ນເອກະສານ ຫຼື ຊ່ວຍຄູ່ຄວາມໃຫ້ເຂົ້າເຖິງພະນັກງານທີ່ຕັດສິນຄະດີ ແລະ ອື່ນໆ.

ໃນຂົງເຂດສຶກສາ, ທາງການຈີນ ໄດ້ມີມາດຕະການເດັດຂາດທີ່ກຳນົດຢູ່ກົດໝາຍອາຍາສະບັບປັບປຸງ (ຂ່າວໜັງສືພິມວຽງຈັນທາມ 15 ຕຸລາ 2015) ຄືຜູ້ທີ່ໂກງຄະແນນໃນບົດສອບເສັງບັນຈຸພະນັກງານລະດັບຊາດ ຈະຖືກຕັດອິດສະຫຼະພາບສູງສຸດ 3 ປີ ຫຼື ຖືກປັບໃໝ ແຕ່ຖ້າເປັນການກະທຳຜິດທີ່ຮ້າຍແຮງໂທດສູງສຸດຈະຖືກປັບຂຶ້ນເປັນຕິດຄຸກແຕ່ 3-7 ປີ, ຖືກກັກຂັງ ຫຼື ຖືກປັບໃໝ; ຂ່າວນີ້ອອກມາໃນຂະນະທີ່ທົ່ວ ສປ ຈີນ ກະກຽມສອບເສັງເພື່ອບັນຈຸພະນັກງານໃໝ່ປະຈຳປີ 2015 ຈຳນວນ 27,000 ຄົນ ເພີ່ມຂຶ້ນຈາກປີ 2014 ຈຳນວນ 5,000 ຄົນ.

ນອກຈາກເລື່ອງທີ່ເກີດຂຶ້ນຢູ່ ສປຈີນ ກໍຍັງມີຂ່າວທີ່ຄວນເປັນອຸທາຫອນສອນໃຈ ຈາກປະເທດອຸດສະເບກິດສະຖານ (ລັດໃນອະດີດສະຫະພາບໂຊວຽດ) ຂ່າວນີ້ນຳສະເໜີໂດຍໜັງສືພິມ The Nation ສະບັບວັນທີ 29 ກໍລະກົດ 2017 ທີ່ບອກວ່າ ນາງ ກຸນນາຣາ ກາຣີໂມວາ (Gulnara Karimova) ລູກສາວອະດີດປະທານາທິບໍດີອຸດສະເບກິດສະຖານ ໄດ້ຕິດແຮ້ວຄະດີປອມແປງ ແລະ ຟອກເງິນ ແລະ ສຸດທ້າຍນາງຄົນນີ້ກໍໜີບໍ່ພົ້ນປາກຄຸກ; ລາຍລະອຽດປີກຍ່ອຍຂອງຂ່າວບອກວ່າ: ນາງ ກຸນນາຣາ ເປັນນັກອອກແບບ, ເປັນນັກຮ້ອງໄຮໂຊ ໂດຍອາໄສທົ່ມເສື້ອພໍ່ທີ່ເປັນຜູ້ນຳສູງສຸດຂອງປະເທດ (ເສຍຊີວິດໃນປີ 2016). ການສອບສວນຂັ້ນສຸດທ້າຍໄດ້ຊີ້ບອກວ່ານາງກຸນນາຣາກາຣີໂມວາບໍ່ພຽງແຕ່ໄດ້ສໍ້ໂກງເງິນລັດເປັນຈຳນວນຫຼວງຫຼາຍ, ແຕ່ນາງຍັງເປັນສະມາຊິກຂອງກຸ່ມກໍ່ການຮ້າຍທີ່ມີການຈັດຕັ້ງອີກດ້ວຍ, ກຸ່ມນີ້ມີຊັບສິນທີ່ມີມູນຄ່າທັງໝົດຫຼາຍກວ່າ 1.3 ພັນຕື້ໂດລາສະຫະລັດ ທີ່ຢັ່ງຢາຍຢູ່ໃນ 12 ປະເທດອີກດ້ວຍ.

ຂໍປິດທ້າຍບົດນີ້ດ້ວຍຂ່າວທີ່ເປັນຕາຢາກຫົວ ແຕ່ມີຄວາມຈິງ ຈາກປະເທດອິນເດຍ (ໜັງສືພິມ ວຽງຈັນທາມ 9 ພຶດສະພາ 2017) ທີ່ບອກວ່າທາງການອິນເດຍ ໄດ້ຈັບກຸມນັກຕົ້ມຕຸ໋ນ 5 ຄົນ ທີ່ຍົວະຂາຍຄຳຕອບຂໍ້ສອບໃຫ້ນັກສຶກສາຈຳນວນ 10 ຄົນ ທີ່ຕ້ອງການຮຽນຕໍ່ໃນມະຫາວິທະຍາໄລການແພດ; ນັກສຶກສາທີ່ຖືກຕົ້ມ ໄດ້ຕົກລົງຈ່າຍເງິນຈຳນວນມະຫາສານ, ນັກສຶກສາຈຳນວນໜຶ່ງ ກໍຈ່າຍໄປແລ້ວສ່ວນໜຶ່ງ. ສຸດທ້າຍ ເວລາຮອດບົດສອບເສັງຕົວຈິງ, ຄຳຕອບທີ່ຊື້ມານັ້ນ ຜັດຍ່າງສວນທາງກັບຄຳຖາມ... ໂອຍຈັ່ງແມ່ນຊາດ ! ແລ້ວນັກຕົ້ມຕຸ໋ນທັງ 5 ຄົນ ກໍຖືກຈັບກຸມຄຸມຂັງ, ສ່ວນນັກສຶກສາທີ່ຕົກໂງ່ນັ້ນ ກໍປາກບໍ່ໄດ້ໄອບໍ່ດັງ ຍ້ອນຕົນເອງໂງ່, ຊິເວົ້າຫຼາຍກໍລະອາຍເພິ່ນ ຫຼື ອາດຕິດແຮ້ວຄະດີຊື້ຄະແນນອີກກໍເປັນໄດ້ !







## ໜັກຍ້ອນແຕ່ງ

*# ບ່າວກະບື*

| | |
|---|---|
| **ນາງແປກ:** | "ຕິກ... ມື້ນີ້ແບມເບິ່ງໂຕຄືສີຕ່າງໆ" |
| **ນາງຕິກ:** | "ແມ່ນແລ້ວ! ທ່ານໝໍແນະນຳໃຫ້ເຮົາຫຼຸດນ້ຳໜັກລົງ 5 ກິໂລພຸ້ນໄດ໋" |
| **ນາງແປກ:** | "ແລ້ວໂຕກໍຫຼຸດໄດ້ 5 ກິໂລແທ້ຫວະ?" |
| **ນາງຕິກ:** | "ໄດ້ແທ້! ເພາະເຮົາເຊົາແຕ່ງໜ້າ" |

## Heavy Make-up

***# BAOKBU***

| | |
|---|---|
| Miss Paek: | "You are looking different today, Tik" |
| Miss Tik: | "Yes! the doctor advised me to reduce 5 kg" |
| Miss Paek: | "And you have reduced 5 kg?" |
| Miss Tik: | "Yes! because I have stopped putting on my make-up" |






ຄວັນພິດ ແລະ ນ້ຳເປື້ອນຈາກໂຮງງານ ຄວນຜ່ານການບຳບັດກ່ອນ

● ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພຶດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

www.na.gov.la ຂ່າວ "ຜູ້ແທນປະຊາຊົນ" Phouthen Pasaxon News Lao NA Media APP: Lao NA